ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

# ຄໍາແນະນໍາວ່າດ້ວຍ
# ຂະບວນການສ້າງຄວາມເຫັນດີເຫັນພ້ອມ ດ້ວຍຄວາມຕື່ນຕົວສະໝັກໃຈ
# ໂດຍໄດ້ຮັບຮູ້ຂໍ້ມູນລ່ວງໜ້າ (FPIC)

## ພາຍໃຕ້

## ໂຄງການປ້ອງກັນດິນຟ້າອາກາດ ໂດຍຫລີກລ້ຽງການທໍາລາຍປ່າໄມ້ (CliPAD) ຢູ່

## ແຂວງຫົວພັນ



ພຶດສະພາ 2017

ຈັດພິມໂດຍ

ຮ່ວມມືໂດຍ:

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ແນວລາວສ້າງຊາດ ແຂວງຫົວພັນ

ເລກທີ........../ນສຂ

ຫົວພັນ, ວັນທີ........................

# ຄໍາແນະນໍາວ່າດ້ວຍ
# ຂະບວນການສ້າງຄວາມເຫັນດີເຫັນພ້ອມ ດ້ວຍຄວາມຕື່ນຕົວສະໝັກໃຈ ໂດຍໄດ້ຮັບຮູ້ຂໍ້ມູນລ່ວງໜ້າ (FPIC)
# ພາຍໃຕ້
# ໂຄງການປ້ອງກັນດິນຟ້າອາກາດ ໂດຍຫລີກລ້ຽງການທໍາລາຍປ່າໄມ້ (CliPAD) ຢູ່ແຂວງຫົວພັນ

## ຄໍານໍາ

ໂຄງການປ້ອງກັນດິນຟ້າອາກາດ ໂດຍຫຼີກລ້ຽງການທໍາລາຍປ່າໄມ້ (CliPAD) ເປັນໂຄງການພັດທະນາ ຂອງລັດຖະບານລາວ ຊຶ່ງໄດ້ຮັບການສະໜັບສະໜູນຈາກ ອົງການຮ່ວມມືສາກົນ ຂອງປະເທດເຢຍລະມັນ GIZ ແລະ ທະນາຄານພັດທະນາເຢຍລະມັນ (KfW). ໂຄງການ CliPAD ຊ່ວຍແຂວງຫົວພັນ ເພື່ອສ້າງແຜນງານ ເຣດ+ ຂັ້ນແຂວງ ແລະ ສະໜອງສິ່ງຈູງໃຈແກ່ຊຸມຊົນທ້ອງຖິ່ນ ເພື່ອໃຫ້ເຂົ້າຮ່ວມໃນຄວາມພະຍາຍາມຄຸ້ມຄອງຈັດສັນ ແລະ ອະນຸລັກປ່າໄມ້ ໂດຍການຊຸກຍູ້ການພັດທະນາໃນເຂດການປົກຄອງທ້ອງຖິ່ນ ແລະ ສະໜັບສະໜູນຍຸດທະສາດ ສໍາລັບ ຫຼຸດຜ່ອນການທໍາລາຍປ່າໄມ້. ໂຄງການ CliPAD ແມ່ນ ເພັ້ນໃສ່ການຄຸ້ມຄອງຈັດສັນປ່າໄມ້ບ້ານ ໂດຍຊາວບ້ານເອງ ຢູ່ໃນ 70 ບ້ານເປົ້າໝາຍບົນພື້ນຖານສັນຍາວ່າດ້ວຍການຄຸ້ມຄອງຈັດສັນປ່າໄມ້ບ້ານ (VilFoMA) ລະຫວ່າງ ຫ້ອງການກະສິກໍາ ແລະ ປ່າໄມ້ເມືອງ ກັບບ້ານໂດຍມີຈຸດປະສົງ ທີ່ຈະສົ່ງເສີມການຄຸ້ມຄອງຈັດສັນ, ການປົກປັກຮັກສາ ແລະ ການອະນຸລັກປ່າໄມ້ບ້ານແບບຍືນຍົງ.

ເພື່ອຕອບສະໜອງໄດ້ຕາມເງື່ອນໄຂ ແລະ ຄວາມຮຽກຮ້ອງຕ້ອງການຂອງຂໍ້ຕົກລົງໃນຂະບວນການເຈລະຈາຢູ່ລະດັບສາກົນ ກ່ຽວກັບ ເຣດ+ ພາຍໃຕ້ສົນທິສັນຍາ ວ່າດ້ວຍການປ່ຽນແປງສະພາບດິນຟ້າອາກາດ (UNFCC) ທີ່ຮຽກຮ້ອງໃຫ້ມີຄວາມເຫັນດີເຫັນພ້ອມຂອງຊຸມຊົນໃນທ້ອງຖິ່ນ ທີ່ຈະມີການຈັດຕັ້ງປະຕິບັດວຽກງານ ເຣດ+ ໂດຍປັດສະຈາກການບັງຄັບທຸກຮູບແບບ ເພື່ອຮັບເອົາ ແລະ ເຂົ້າຮ່ວມຈັດຕັ້ງປະຕິບັດວຽກ ເຣດ+ ດັ່ງກ່າວ ທີ່ມີຜົນກະທົບທາງລົບ ແລະ/ຫລື ທາງບວກ ຕໍ່ກັບຊີວິດການຢູ່ຂອງເຂົາເຈົ້າ. ການຊອກຫາຄວາມເຫັນດີເຫັນພ້ອມ ດ້ວຍຄວາມຕື່ນຕົວສະໝັກໃຈ ຂອງຊຸມຊົນຕໍ່ກັບວຽກງານ ເຣດ+ ນີ້ ແມ່ນມີຄວາມສໍາຄັນຫລາຍໃນການຕອບສະໜອງຄວາມຮຽກຮ້ອງຕ້ອງການຂອງຂໍ້ຕົກລົງສາກົນ ທາງດ້ານການປົກປ້ອງສັງຄົມ ແລະ ສິ່ງແວດລ້ອມ (social and environmental safeguards) ແລະ ອີກດ້ານໜຶ່ງ ກໍແມ່ນໃຫ້ໄດ້ຕາມມາດຖານ ຂອງສະຫະພັນຊຸມຊົນດິນຟ້າອາກາດ ແລະ ຊີວະນາໆພັນ CCBA ເພື່ອຈະມີເງື່ອນໄຂຮັບເອົາການຈ່າຍຕາມຜົນງານ ໃນການຫລຸດຜ່ອນການປ່ອຍອາຍພິດເຮືອນແກ້ວ ຈາກກອງທຶນສາກົນຕ່າງໆ ກ່ຽວກັບການປ່ຽນແປງດິນຟ້າອາກາດ ຫລື ຈາກຕະຫຼາດສິນເຊື່ອກາກບອນ.

ເພື່ອປະຕິບັດຕາມເງື່ອນໄຂດັ່ງກ່າວມານີ້, ໂຄງການ CliPAD ໄດ້ມີເຈດຈໍານົງ ທີ່ຈະນໍາໃຊ້ຂະບວນການປຶກສາຫາລື ເພື່ອຄວາມເຫັນດີເຫັນພ້ອມ ດ້ວຍຄວາມຕື່ນຕົວສະໝັກໃຈ ໂດຍໄດ້ຮັບຮູ້ຂໍ້ມູນລ່ວງໜ້າ (Free, Prior, Informed Consent: FPIC) ຊຶ່ງຖືວ່າເປັນມາດຕະການໜຶ່ງຂອງການປົກປ້ອງສັງຄົມ ແລະ ສິ່ງແວດລ້ອມ ຢູ່ໃນ 70 ບ້ານເປົ້າໝາຍ ຂອງສອງເມືອງຄື ເມືອງຊໍາເໜືອ (30 ບ້ານ) ແລະ ເມືອງຫົວເມືອງ (40 ບ້ານ) ແຂວງຫົວພັນ. ຂະບວນການປຶກສາຫາລື ເພື່ອຄວາມເຫັນດີເຫັນພ້ອມ ດ້ວຍຄວາມຕື່ນຕົວສະໝັກໃຈ ໂດຍໄດ້ຮັບຮູ້ຂໍ້ມູນລ່ວງໜ້າ ໄດ້ຮັບການຈັດຕັ້ງປະຕິບັດ ບົນພື້ນຖານການຮ່ວມມືລະຫວ່າງສາມຝ່າຍຄື ອົງການຮ່ວມມືສາກົນ ຂອງປະເທດເຢຍລະມັນ (GIZ), ສູນກາງແນວລາວສ້າງຊາດ ແລະ ກົມຄຸ້ມຄອງຊັບພະຍາກອນປ່າໄມ້ ພາຍໃຕ້ບົດບັນທຶກຄວາມເຂົ້າໃຈ , ລົງວັນທີ 24 ມິຖຸນາ 2014, ໃນນັ້ນສູນກາງແນວລາວສ້າງຊາດມີຄວາມຮັບຜິດຊອບໃນການພັດທະນາຄໍາແນະນໍາ ກ່ຽວກັບ "ຂະບວນການປຶກສາຫາລື ເພື່ອຄວາມເຫັນດີເຫັນພ້ອມດ້ວຍຄວາມຕື່ນຕົວສະໝັກໃຈ ໂດຍໄດ້ຮັບຮູ້ຂໍ້ມູນລ່ວງໜ້າ" ແລະ ຄໍາແນະນໍາ ກ່ຽວກັບ "ການໄກ່ເກ່ຍຂໍ້ຂັດແຍ່ງຂັ້ນບ້ານ" ເພື່ອໃຫ້ໂຄງການ CliPAD ນໍາໃຊ້ຢູ່ໃນພື້ນທີ່ເປົ້າໝາຍຂອງໂຄງການ.

ຫລັງຈາກທີ່ໄດ້ຮັບການພັດທະນາຂຶ້ນ ແລະ ຜ່ານການທົດລອງນໍາໃຊ້ມາໄລຍະໜຶ່ງ ກໍໄດ້ມີການປະເມີນໂດຍຊ່ຽວຊານສະເພາະດ້ານສາກົນ ເພື່ອສຶກສາເບິ່ງຄວາມເໝາະສົມຖືກຕ້ອງຂອງຂະບວນການດັ່ງກ່າວ ຕາມທີ່ໄດ້ກໍານົດໄວ້ຢູ່ໃນຄໍາແນະນໍາ ວ່າແທດເໝາະກັບເງື່ອນໄຂ ແລະ ມາດຖານສາກົນທີ່ກ່ຽວຂ້ອງ. ການປະເມີນດັ່ງກ່າວກໍໄດ້ສະໜອງຂໍ້ມູນຫລາຍຢ່າງທີ່ຊ່ວຍໃຫ້ມີການປັບປຸງຄໍາແນະນໍາ ໃຫ້

ເປັນສາກົນຫລາຍຂຶ້ນ ພາຍໃຕ້ກອບສົນທິສັນຍາ ວ່າດ້ວຍການປ່ຽນແປງສະພາບດິນຟ້າອາກາດ (UNFCC) ພ້ອມດຽວກັນນັ້ນ ກໍຍັງສອດຄ່ອງກັບເງື່ອນໄຂ ແລະ ສະພາບການຂອງ ສປປ ລາວ.

ຄຳແນະນຳ ກ່ຽວກັບ "ຂະບວນການປຶກສາຫາລື ເພື່ອຄວາມເຫັນດີເຫັນພ້ອມ ດ້ວຍຄວາມຕື່ນຕົວສະໝັກໃຈ ໂດຍໄດ້ຮັບຮູ້ຂໍ້ມູນລ່ວງໜ້າ" ສາມາດນຳໃຊ້ຢູ່ໃນໂຄງການ CliPAD ແລະ ຖ້າຫາກມີເງື່ອນໄຂກໍສາມາດນຳເອົາໄປໝູນໃຊ້ໄດ້ ສຳລັບໂຄງການ ເຣດ+ ຢູ່ເຂດອື່ນໆຕາມຄວາມເໝາະສົມ ຫລື ໂຄງການພັດທະນາອື່ນໆ ທີ່ມີຜົນກະທົບຕໍ່ຊີວິດການເປັນຢູ່ ຂອງຊຸມຊົນຢູ່ໃນພື້ນທີ່. ແນ່ນອນແລ້ວ ອາດມີຄວາມຈຳເປັນທີ່ຈະຕ້ອງໄດ້ດັດປັບ ຄຳແນະນຳ ທາງດ້ານເນື້ອໃນ, ຂະບວນການ, ຂັ້ນຕອນ ແລະ ບາດກ້າວ ເພື່ອໃຫ້ສອດຄ່ອງກັບແນວຄວາມຄິດ, ຈຸດປະສົງ ແລະ ຄາດ ໝາຍ ຂອງໂຄງການນັ້ນໆ.

ແນວໃດກໍຕາມ ຄຳແນະນຳ ກ່ຽວກັບຂະບວນການປຶກສາຫາລືເພື່ອຄວາມເຫັນດີເຫັນພ້ອມ ດ້ວຍຄວາມຕື່ນຕົວສະໝັກໃຈ ໂດຍໄດ້ຮັບຮູ້ຂໍ້ມູນລ່ວງໜ້າສະບັບນີ້ໄດ້ຮັບການຂຽນຂຶ້ນ ແລະ ນຳໃຊ້ເປັນຄັ້ງທຳອິດ ສຳລັບໂຄງການທີ່ກ່ຽວພັນກັບການຄຸ້ມຄອງ ແລະ ປົກປັກຮັກສາປ່າໄມ້ ໂດຍມີເປົ້າໝາຍສຸດທ້າຍ ດ້ານການຫລຸດຜ່ອນການປ່ອຍອາຍພິດເຮືອນແກ້ວ ຈາກການທຳລາຍປ່າໄມ້ ແລະ ການເຮັດໃຫ້ປ່າໄມ້ເສື່ອມໂຊມ (REDD+). ດັ່ງນັ້ນ ຈຶ່ງບໍ່ສາມາດປາດສະຈາກຄວາມຂາດຕົກບົກຜ່ອງທາງດ້ານເນື້ອໃນ, ສຳນວນ ແລະ ຄຳສັບຕ່າງໆ ທີ່ໃຊ້ຢູ່ໃນຄຳແນະນຳສະບັບນີ້, ຈຶ່ງຂໍອະໄພນຳບັນດາທ່ານຜູ້ອ່ານມາໃນໂອກາດນີ້ດ້ວຍ ແລະ ພວກເຮົາຂໍສະແດງຄວາມຂອບໃຈເປັນຢ່າງສູງ ແລະ ຍິນດີຮັບເອົາຄຳຕຳນິຕິຊົມຈາກທຸກພາກສ່ວນ ເພື່ອຈະເປັນບ່ອນອີງໃນການປັບປຸງຄຳແນະນຳສະບັບນີ້ ໃຫ້ດີຂຶ້ນໃນອະນາຄົດ.

ພ້ອມດຽວກັນນີ້ ພວກເຮົາຂໍສະແດງຄວາມຂອບໃຈເປັນຢ່າງສູງມາຍັງບຸກຄົນ ແລະ ທຸກພາກສ່ວນ, ໂດຍສະເພາະແມ່ນຢູ່ຂັ້ນທ້ອງຖິ່ນ ແຂວງ, ເມືອງ ແລະ ບ້ານ, ທີ່ໄດ້ໃຫ້ການຮ່ວມມື, ການສະໜັບສະໜູນ, ເອື້ອອຳນວຍຄວາມສະດວກ ແລະ ປະກອບສ່ວນຢ່າງມີປະສິດທິຜົນໃນຂະບວນການພັດທະນາຄຳແນະນຳສະບັບນີ້.

ຫົວພັນ, ວັນທີ..16..ພຶດສະພາ..2017

ຮອງປະທານແນວລາວສ້າງຊາດແຂວງ

ແນວລາວສ້າງຊາດແຂວງຫົວພັນ ປະທານ

ວິເຕັ່ງ ຈີໄມເຕັ່ງ

# ພາກທີ I

# ພາກສະເໜີ

ສປປ ລາວ ເປັນປະເທດພາຄີ ຂອງສົນທິສັນຍາສະຫະປະຊາຊາດ ວ່າດ້ວຍການປ່ຽນແປງດິນຟ້າອາກາດ (UNFCCC) ໃນການຊອກຫາການຊ່ວຍເຫລືອດ້ານວິຊາການ ຫລືດ້ານການເງິນ ພາຍໃຕ້ສົນທິສັນຍາ UNFCCC ໂດຍສະເພາະກ່ຽວກັບການຫລຸດຜ່ອນການປ່ອຍອາຍພິດ ຈາກການທຳລາຍປ່າໄມ້ ແລະ ການເຮັດໃຫ້ປ່າໄມ້ເສື່ອມໂຊມ (REDD+), ມັນເປັນພັນທະທີ່ຈະຕ້ອງປະຕິບັດຕາມຂໍ້ຕົກລົງຕ່າງໆຢູ່ກອງປະຊຸມຂອງບັນດາປະເທດທີ່ເປັນພາຄີ ຂອງ UNFCCC. ຂໍ້ຕົກລົງເຫລົ່ານີ້ຍັງກວມເອົາບົດບັນຍັດ ສຳລັບ “ສະພາບການໃນປະເທດ” ຂອງບັນດາປະເທດພາຄີ ພາຍໃຕ້ UNFCCC, ກອງປະຊຸມຂອງບັນດາປະເທດພາຄີ ໄດ້ຕົກລົງວ່າສຳລັບກິດຈະກຳຕ່າງໆທັງໝົດທີ່ກ່ຽວຂ້ອງ ກັບ ເຣດ ທີ່ພາໃຫ້ມີການປ່ຽນແປງດ້ານການຄຸ້ມຄອງຈັດສັນຊັບພະຍາກອນປ່າໄມ້ ໂດຍຄົນພື້ນເມືອງ ແລະ ຊຸມຊົນທ້ອງຖິ່ນ, ຈຳເປັນຕ້ອງໄດ້ເຄົາລົບບົດບັນຍັດຂອງຖະແຫຼງການສະຫະປະຊາຊາດວ່າດ້ວຍສິດທິຂອງຄົນພື້ນເມືອງ (UNDRIP). ຖະແຫຼງການ UNDRIP ກຳນົດໃຫ້ມີຄວາມເຫັນດີເຫັນພ້ອມ ດ້ວຍຄວາມຕື່ນຕົວສະໝັກໃຈ ໂດຍໄດ້ຮັບຮູ້ຂໍ້ມູນລ່ວງໜ້າ (FPIC) ທາງດ້ານສິດຕໍ່ທີ່ດິນ ແລະ ສິດອື່ນໆ ຂອງຄົນພື້ນເມືອງ ສປປ ລາວ ໄດ້ອອກສຽງເຫັນດີ ຕໍ່ກັບຖະແຫຼງການ UNDRIP ຢູ່ກອງປະຊຸມໃຫຍ່ ຂອງອົງການສະຫະປະຊາຊາດໃນເດືອນ ທັນວາ ປີ 2007.

ສປປ ລາວ ເປັນປະເທດໜຶ່ງ ທີ່ມີສັງຄົມປະກອບດ້ວຍຫຼາຍຊົນເຜົ່າ ທັງໝົດ 49 ຊົນເຜົ່າ ທີ່ໄດ້ຖືກຮັບຮູ້ຢ່າງເປັນທາງການໃນລັດຖະທຳມະນູນ ໂດຍດຳລົງຊີວິດຢູ່ທົ່ວປະເທດ. ນອກຈາກນັ້ນ ສປປ ລາວ, ເຄົາລົບຢ່າງເຕັມປ່ຽມບັນດາສັນຍາ ແລະ ສົນທິສັນຍາສາກົນ, ກຸ່ມຊົນເຜົ່າຫຼາຍກຸ່ມ ທີ່ຕົນເອງໄດ້ໃຫ້ສັນຍາບັນ ດ້ວຍການປັບປຸງກົດໝາຍ ແລະ ສ້າງນິຕິກຳໃຫ້ສອດຄ່ອງກັບສັນຍາ ແລະ ສົນທິສັນຍາສາກົນເຫລົ່ານັ້ນ.

ໂຄງສ້າງ ແລະ ເນື້ອໃນຂອງຄຳແນະນຳກ່ຽວກັບ FPIC ສະບັບນີ້ ມີຂະບວນການ ແລະ ຂັ້ນຕອນທີ່ຈຳເປັນເພື່ອຈັດຕັ້ງປະຕິບັດກັບບັນດາຊຸມຊົນທ້ອງຖິ່ນ ຈາກກຸ່ມຊົນເຜົ່າທັງໝົດ ຊຶ່ງປະກອບດ້ວຍ 3 ພາກ, ຫລາຍຂໍ້ ແລະ ມີນິຍາມຄຳສັບ ແລະ ຂໍ້ຄວາມສຳຄັນທີ່ຖືກນຳໃຊ້ຢູ່ໃນຄຳແນະນຳສະບັບນີ້. ຄຳແນະນຳ ເຂົ້າໃຈວ່າ ບັນດາກົດໝາຍ, ລະບຽບການ ແລະ ແຜນພັດທະນາເສດຖະກິດ-ສັງຄົມ ທີ່ກ່ຽວຂ້ອງຂອງລັດຖະບານ ໄດ້ຖືກເຜີຍແຜ່ໃຫ້ປະຊາຊົນທ້ອງຖິ່ນຢ່າງພຽງພໍແລ້ວ. ອີງຕາມຫລັກການຂອງ FPIC, ບັນດາຊຸມຊົນທ້ອງຖິ່ນຈະຕ້ອງໄດ້ມີເວລາ ແລະ ໂອກາດທີ່ພຽງພໍ ເພື່ອຕັດສິນໃຈວ່າຈະຮັບ ຫຼື ເຂົ້າຮ່ວມໃນການຈັດຕັ້ງປະຕິບັດໂຄງການ ທີ່ອາດສາມາດສົ່ງຜົນກະທົບຕໍ່ການເຂົ້າເຖິງ, ການຄວບຄຸມ ຫຼື ຄວາມສາມາດໃນການໄດ້ຮັບຜົນປະໂຫຍດຈາກທີ່ດິນ ແລະ ຊັບພະຍາກອນທຳມະຊາດລວມທັງຊັບພະຍາກອນປ່າໄມ້.

ຄຳແນະນຳໃນເບື້ອງຕົ້ນໄດ້ຖືກກຳນົດຂື້ນມາ ເພື່ອນຳໃຊ້ໃນຂອບເຂດຂອງໂຄງການປ້ອງກັນດິນຟ້າອາກາດ ໂດຍຫຼີກລ້ຽງການທຳລາຍປ່າໄມ້ (CliPAD) ເຊີ່ງປະກອບດ້ວຍບ້ວງການຮ່ວມມືດ້ານວິຊາການ ແລະ ດ້ານການເງີນ. ຄຳແນະນຳນີ້ຈະຕ້ອງມີຜົນນຳໃຊ້ສຳລັບທຸກກິດຈະກຳ ທີ່ກ່ຽວຂ້ອງກັບການວາງແຜນ ແລະ ການຈັດຕັ້ງປະຕິບັດຂອງໂຄງການ CliPAD ຊຶ່ງອາດຈະເປັນດ້ານວິຊາການ ຫຼືດ້ານການເງີນ. ປື້ມຄູ່ມືບໍ່ຕ້ອງມີເຈດຕະນາທີ່ຈະໃຫ້ເປັນຄຳແນະນຳທີ່ສົມບູນຄົບຊຸດ ແຕ່ວ່າໃຫ້ເປັນພຽງເອກະສານທີ່ແນະນຳທິດທາງທົ່ວໄປ ກ່ຽວກັບການດຳເນີນຂະບວນການ FPIC ຮ່ວມກັບຊຸມຊົນທ້ອງຖິ່ນ.

**ບາງຄຳສັບສຳຄັນທີ່ນຳໃຊ້ຢູ່ໃນເອກະສານນີ້:**

***- ຄວາມເຫັນດີເຫັນພ້ອມດ້ວຍຄວາມຕື່ນຕົວສະໝັກໃຈໂດຍໄດ້ຮັບຮູ້ຂໍ້ມູນລ່ວງໜ້າ.***

**ດ້ວຍຄວາມຕື່ນຕົວສະໝັກໃຈ:** ຄວາມເຫັນດີເຫັນພ້ອມຂອງປະຊາຊົນຈະຕ້ອງໄດ້ມາໂດຍປາດສະຈາດການໃຊ້ກຳລັງ, ຂົ່ມຂູ່ ຫຼື ການບັງຄັບທຸກປະເພດ. ນອກຈາກນັ້ນ, ປະຊາຊົນຄວນຈະບໍ່ຖືກຫຼອກລວງ ຫຼື ຕົວະຍົວະ ເພື່ອຄວາມເຫັນດີເຫັນພ້ອມ ເພາະສະນັ້ນ, ດີແທ້ຜູ້ອຳນວຍຄວາມສະດວກ (ຜູ້ດຳເນີນ) ຂະບວນການ FPIC ບໍ່ຄວນຈະມີສ່ວນໄດ້ສ່ວນເສຍຢູ່ໃນໝາກຜົນໄດ້ຮັບຈາກການປຶກສາຫາລື.

**ລ່ວງໜ້າ:** ຊຸມຊົນຈະຕ້ອງໄດ້ຮັບຂໍ້ມູນ ກ່ຽວກັບໂຄງການ ຫຼື ກິດຈະກຳ ແລະ ມີເວລາພຽງພໍທີ່ຈະທົບທວນຄືນ ກ່ອນກິດຈະກຳໂຄງການຈະເລີ່ມຂື້ນ.

**ໂດຍໄດ້ຮັບຮູ້ຂໍ້ມູນ:** ຂໍ້ມູນທີ່ສະໜອງໃຫ້ນັ້ນແມ່ນມີລາຍລະອຽດ, ເນັ້ນໃຫ້ເຫັນກ່ຽວກັບຜົນກະທົບດ້ານບວກ ແລະ ດ້ານລົບທີ່ອາດຈະເກີດຂື້ນຈາກກິດຈະກຳຂອງໂຄງການ (ໂດຍສະເພາະທຸກໆຄວາມໝາຍຂອງສັນຍາ ຫຼື ຂໍ້ຕົກລົງສຳລັບສິດໃນປັດຈຸບັນ ແລະ ອະນາຄົດຕໍ່ກັບທີ່ດິນ ຫຼື ການເຂົ້າເຖິງຊັບພະຍາກອນ) ແລະ ຖືກນຳສະເໜີເປັນພາສາ ແລະ ຮູບແບບທີ່ເຂົ້າໃຈງ່າຍເປັນທີ່ຍອມຮັບໄດ້ໂດຍຫຼາຍພາກສ່ວນຂອງຊຸມຊົນ.

**ຄວາມເຫັນດີເຫັນພ້ອມ:** ໝາຍເຖິງສິດຂອງຊຸມຊົນໃນການເຫັນດີ ຫຼື ບໍ່ເຫັນດີ ຕໍ່ ໂຄງການ ກ່ອນຈະເລີ່ມຂື້ນ ແລະ ສິດທິຂອງເຂົາເຈົ້າໃນການຖອນຄືນຄວາມເຫັນດີເຫັນພ້ອມຂອງເຂົາເຈົ້າ ຖ້າວ່າໂຄງການສະແດງໃຫ້ເຫັນວ່າມີຜົນກະທົບທາງລົບຕໍ່ຊີວິດການເປັນຢູ່ຂອງເຂົາເຈົ້າໃນຊ່ວງໄລຍະການຈັດຕັ້ງປະຕິບັດ.

***- ຊຸມຊົນທ້ອງຖິ່ນ:*** ບັນດາກອງປະຊຸມປະເທດພາຄີພາຍໃຕ້ສົນທິສັນຍາ UNFCCC ໄດ້ກ່າວເຖິງ "ຊຸມຊົນທ້ອງຖິ່ນ" ໃນການຕັດສິນໃຈຂອງເຂົາເຈົ້າທີ່ພົວພັນ ກັບວຽກງານ ເຣດ+. ຢູ່ໃນ ສປປ ລາວ ອາດຈະທຽບເທົ່າກັບບ້ານທີ່ມີຂອບເຂດການປົກຄອງລວມທັງບ້ານນ້ອຍທັງໝົດ ແລະ ປະຊາຊົນທຸກຊົນເຜົ່າທີ່ໄດ້ດຳລົງຊີວິດຢູ່ພື້ນທີ່ນັ້ນ.

***- ກຸ່ມຊົນເຜົ່າ:*** ກຸ່ມຄົນ ທີ່ມີພາສາ, ປະເພນີ ແລະ ວັດທະນະທຳທີ່ແຕກຕ່າງກັນ ແລະ ໂດຍທົ່ວໄປແລ້ວ ແມ່ນມີສຳນຽງຄຳເວົ້າທີ່ເປັນເອກະລັກສະເພາະຕິດພັນກັບທີ່ຕັ້ງພູມສັນຖານໃດໜຶ່ງ. ຄຳສັບນີ້ຖືກ

ນຳໃຊ້ໃນ ສປປ ລາວ ແທນຄຳວ່າຄົນພື້ນເມືອງເໝືອນດັ່ງທີ່ໄດ້ກ່າວໄວ້ພາຍໃຕ້ຂໍ້ຕົກລົງຂອງ UNFCCC.

***- ອົງການຈັດຕັ້ງທາງສັງຄົມ (CSOs):*** ທຸກກຸ່ມ ຂອງແມ່ຍິງ ຫຼື ຜູ້ຊາຍ ທີ່ໄດ້ຖືກສ້າງຕັ້ງຂຶ້ນດ້ວຍຕົນເອງຢ່າງຖືກຕ້ອງຕາມກົດໝາຍ ຊຶ່ງມີຄວາມສົນໃຈ ຫຼື ຈຸດປະສົງເໝືອນກັນແບບຄວາມສະຫງົບສຸກ ແຕ່ຢູ່ນອກໂຄງສ້າງການຈັດຕັ້ງຂອງພັກ-ລັດ ແລະ ກໍຍັງບໍ່ແມ່ນຫົວໜ່ວຍທຸລະກິດທີ່ເປັນທາງການ. ອົງການຈັດຕັ້ງເຫຼົ່ານີ້ອາດຈະເປັນອົງການຈັດຕັ້ງທີ່ບໍ່ເປັນທາງການເຊັ່ນວ່າ: ກຸ່ມຊາວກະສິກອນ, ສະມາຄົມທີ່ບໍ່ຫວັງຜົນກຳໄລ ແລະ ອື່ນໆ.

## 1. ຈຸດປະສົງ.

### 1.1. ຈຸດປະສົງ.

- ຈຸດປະສົງຕົ້ນຕໍຂອງຄຳແນະນຳນີ້ ແມ່ນເພື່ອໃຫ້ເຫັນພາບລວມດ້ານແນວທາງປະຕິບັດ ແລະ ຂັ້ນຕອນຕ່າງໆໃນການປຶກສາຫາລືກັບບັນດາຊຸມຊົນທ້ອງຖິ່ນຂອງທຸກຊົນເຜົ່າໃນລັກສະນະທີ່ສອດຄ່ອງກັບຫຼັກການ FPIC ທີ່ໄດ້ຮັບການຖືກຍອມຮັບໃນລະດັບສາກົນ ພ້ອມກັນນັ້ນກໍສະແດງເຖິງ ສະພາບພາຍໃນປະເທດ ຂອງ ສປປ ລາວ;
- ສະໜອງໂຄງປະກອບສຳລັບຂະບວນການປຶກສາຫາລືໜຶ່ງທີ່ມີປະສິດທິຜົນ ແລະ ມີຄວາມໝາຍກັບບັນດາຊຸມຊົນທ້ອງຖິ່ນ ຊຶ່ງຈະສົ່ງຜົນເຮັດໃຫ້ເຂົາເຈົ້າເຂົ້າໃຈຄວາມໝາຍຢ່າງຄົບຖ້ວນຕໍ່ກັບຊີວິດການເປັນຢູ່ຂອງເຂົາເຈົ້າໃນການເຂົ້າຮ່ວມ ຫຼື ບໍ່ເຂົ້າຮ່ວມໂຄງການ, ເພື່ອໃຫ້ເຂົາເຈົ້າສາມາດໃຫ້ຄວາມເຫັນດີເຫັນພ້ອມໄດ້.
- ສະໜອງໂຄງປະກອບສຳລັບຂະບວນການໜຶ່ງທີ່ມີປະສິດທິຜົນທັງສອດຄ່ອງກັບ ແລະ ເຄົາລົບຕໍ່ປະເພນີ ແລະ ວັດທະນາທຳຂອງບັນດາຊົນເຜົ່າທີ່ມີຢູ່ໃນຊຸມຊົນທ້ອງຖິ່ນ ພ້ອມກັນນັ້ນ ຍັງເຄົາລົບລັດຖະທຳມະນູນ ແລະ ບັນດານິຕິກຳ ຂອງ ສປປ ລາວ ແລະ ພັນທະຂອງຕົນພາຍໃຕ້ສົນທິສັນຍາ ແລະ ຂໍ້ຕົກລົງສາກົນ.
- ເຜີຍແຜ່ບັນດານະໂຍບາຍ, ນິຕິກຳ ແລະ ແຜນພັດທະນາເສດຖະກິດສັງຄົມຂອງລັດຖະບານຕໍ່ປະຊາຊົນບັນດາເຜົ່າ ເພື່ອໃຫ້ເຂົ້າໃຈຢ່າງກ້ວາງຂວາງ.

### 1.2. ໝາກຜົນທີ່ຄາດວ່າຈະໄດ້ຮັບໃນການດຳເນີນຂະບວນການ FPIC.

- ປະຊາຊົນບັນດາເຜົ່າລວມທັງ ແມ່ຍິງ ແລະ ຜູ້ຊາຍ ທີ່ມາຈາກຊົນເຜົ່າຕ່າງໆ ໄດ້ຮັບຮູ້ ແລະ ເຂົ້າໃຈກ່ຽວກັບສິດຂອງຕົນຢູ່ໃນຂະບວນການ FPIC ໂດຍມີການເຄົາລົບການຄຸ້ມຄອງຈັດສັນດ້ານທີ່ດິນ ແລະ ປ່າໄມ້;
- ປະຊາຊົນບັນດາເຜົ່າ ລວມທັງ ແມ່ຍິງ ແລະ ຜູ້ຊາຍທີ່ມາຈາກຊົນເຜົ່າຕ່າງໆ ໄດ້ເຂົ້າໃຈຂໍ້ມູນທີ່ໄດ້ເຜີຍແຜ່ກ່ຽວກັບກິດຈະກຳຂອງໂຄງການໃນດ້ານ ຈຸດປະສົງ, ເປົ້າໝາຍ, ຜົນປະໂຫຍດ ແລະ ຜົນກະທົບ ທີ່ເປັນໄປໄດ້ ຊຶ່ງອາດຈະເກີດຂຶ້ນກັບເຂົາເຈົ້າ;
- ປະຊາຊົນບັນດາເຜົ່າລວມທັງ ແມ່ຍິງ ແລະ ຜູ້ຊາຍທີ່ມາຈາກຊົນເຜົ່າຕ່າງໆ ສາມາດກ້າວໄປສູ່ການຕັດສິນໃຈຢ່າງຈະແຈ້ງ, ເປັນທຳ ແລະ ດ້ວຍຄວາມຕື່ນຕົວສະໝັກໃຈ ວ່າເຂົາເຈົ້າຈະມີ

ຄວາມເຫັນດີເຫັນພ້ອມ ຫຼື ບໍ່ຕໍ່ກັບຂັ້ນຕອນຕ່າງໆຂອງໂຄງການທີ່ຖືກຈັດຕັ້ງປະຕິບັດໃນຊຸມຊົນ ແລະ ທີ່ດິນທີ່ໄດ້ຈັດສັນໃຫ້ເຂົາເຈົ້າ;

- ປະຊາຊົນບັນດາເຜົ່າ ລວມທັງ ແມ່ຍິງ ແລະ ຜູ້ຊາຍທີ່ມາຈາກຊົນເຜົ່າຕ່າງໆໄດ້ຮັບຮູ້ ແລະ ເຂົ້າໃຈຢ່າງເລິກເຊິ່ງ ແລະ ກວ້າງຂວາງຕໍ່ກັບນະໂຍບາຍ, ນິຕິກຳ ແລະ ແຜນພັດທະນາເສດຖະກິດສັງຄົມ ຂອງລັດຖະບານ.

## 2. ຂອບເຂດການນຳໃຊ້.

ຄຳແນະນຳ FPIC ສະບັບນີ້ຈະຖືກນຳໃຊ້ ໂດຍໜ່ວຍງານ FPIC ໃນຊ່ວໄລຍະທີ່ຈັດຕັ້ງປະຕິບັດໂຄງການ CliPAD ຢູ່ສອງເມືອງຂອງ ແຂວງຫົວພັນ ຄື: ເມືອງຫົວເມືອງ ແລະ ເມືອງຊຳເໜືອ, ແຕ່ໃນຕໍ່ໜ້າໄປກໍຍັງຈະລວມເອົາເມືອງອື່ນອີກກໍໄດ້ ທີ່ໂຄງການນີ້ ຫຼື ໂຄງການອື່ນໆຈະຖືກຈັດຕັ້ງປະຕິບັດໃນອະນາຄົດ. ແນວຄວາມຄິດ ແລະ ແນວທາງປະຕິບັດຂອງການປຶກສາຫາລືຢູ່ຂັ້ນທ້ອງຖິ່ນດັ່ງທີ່ໄດ້ກຳນົດໄວ້ຢູ່ໃນຄຳແນະນຳນີ້ຍັງອາດຈະນຳໃຊ້ກັບໂຄງການພັດທະນາ ແລະ ໂຄງການລົງທຶນໃນທົ່ວ ສປປ ລາວ ຖ້າເຫັນວ່າມີຄວາມເໝາະສົມ.[1]

ຂະບວນການປຶກສາຫາລື FPIC ຈະຕ້ອງຖືກດຳເນີນໄປຕະຫຼອດໄລຍະຂອງໂຄງການ ຊຶ່ງເລີ່ມຈາກການວາງແຜນ, ການຈັດຕັ້ງປະຕິບັດ ແລະ ການຕິດຕາມກວດກາໂຄງການ. ສິ່ງນີ້ແມ່ນເລີ່ມຈາກການເກັບກຳຂໍ້ມູນ, ການດຳເນີນການສຶກສາຄວາມເປັນໄປໄດ້, ການສຳຫຼວດ, ການອອກແບບ, ການວາງແຜນ, ການຈັດຕັ້ງປະຕິບັດ, ການຕິດຕາມ, ການກວດກາ ແລະ ການປະເມີນຜົນ. ພາຍໃຕ້ແນວຄວາມຄິດ ແລະ ຈຸດປະສົງເບື້ອງຕົ້ນຂອງໂຄງການຂະບວນການ FPIC ຄວນຈະນຳໃຊ້ ຫລັງສຳເລັດການວາງແຜນນຳໃຊ້ທີ່ດິນຂັ້ນບ້ານແບບມີສ່ວນຮ່ວມ ຊຶ່ງຊຸມຊົນເຂົ້າຮ່ວມໃນການຕັດສິນໃຈກ່ຽວກັບການກຳນົດແຜນນຳໃຊ້ທີ່ດິນ ແລະ ຊັບພະຍາກອນຢູ່ພາຍໃນຂອບເຂດບ້ານຂອງເຂົາເຈົ້າເອງ, ຊຶ່ງເຂົາເຈົ້າຕ້ອງໄດ້ນັບຖື ແລະ ພ້ອມກັນປະຕິບັດຕາມ ເພື່ອຕອບສະໜອງຄວາມຕ້ອງການດ້ານຊີວິດການເປັນຢູ່, ໂດຍສະເພາະແມ່ນຄວາມປອດໄພດ້ານສະບຽງອາຫານຂອງເຂົາເຈົ້າ. ການວາງແຜນນຳໃຊ້ທີ່ດິນນີ້ ເປັນໜ້າທີ່ຂອງລັດຖະບານ, ດຳເນີນງານໂດຍອົງການຈັດຕັ້ງທີ່ກ່ຽວຂ້ອງລັດ,ເຖິງຈະມີ ຫລື ບໍ່ມີໂຄງການ.

## 3. ສົນທິສັນຍາສາກົນ ແລະ ນະໂຍບາຍ, ນິຕິກຳ ແລະ ລະບຽບການແຫ່ງຊາດ.

ຄຳແນະນຳສະບັບນີ້ແມ່ນອີງໃສ່ຫຼາຍແຫຼ່ງຂອງສົນທິສັນຍາສາກົນ ແລະ ບັນດານະໂຍບາຍ, ກົດໝາຍ ແລະ ລະບຽບການ ຂອງລາວລວມມີດັ່ງຕໍ່ໄປນີ້:

### 3.1 ນິຕິກຳພາຍໃນທີ່ກ່ຽວຂ້ອງ.

- ລັດຖະທຳມະນູນ ແຫ່ງ ສປປ ລາວ;

[1] ນອກຈາກນັ້ນ, ການພິຈາລະນາຄວນຈະໃຫ້ອີງໃສ່ "ຄູ່ມືການປະຕິບັດງານ ສຳລັບ ການເຂົ້າມາມີສ່ວນຮ່ວມ ຂອງຊຸມຊົນ" ທີ່ລວມມີ FPIC, ຊຶ່ງ ຖືກສ້າງຂຶ້ນ ໃນປີ 2015 ພາຍໃຕ້ ກົມປ່າໄມ້, ກະຊວງກະສິກຳ ແລະ ປ່າໄມ້.

- ກົດໝາຍ ວ່າດ້ວຍ ແນວລາວສ້າງຊາດ;
- ກົດໝາຍ ວ່າດ້ວຍ ການສ້າງນິຕິກຳ;
- ກົດໝາຍ ວ່າດ້ວຍ ທີ່ດິນ;
- ກົດໝາຍ ວ່າດ້ວຍ ປ່າໄມ້;
- ກົດໝາຍ ວ່າດ້ວຍ ນ້ຳ;
- ກົດໝາຍ ວ່າດ້ວຍ ການປົກຄອງບໍລິຫານທ້ອງຖິ່ນ ແລະ ບັນດາຄຳແນະນຳ ທີ່ກ່ຽວຂ້ອງກ່ຽວກັບ "ສາມສ້າງ";
- ດຳລັດ ວ່າດ້ວຍ ການສ້າງຕັ້ງ, ບົດບາດ, ຄວາມຮັບຜິດຊອບ ແລະ ໜ້າທີ່ ຂອງແນວລາວສ້າງຊາດ (LFNC), ສະຫະພັນແມ່ຍິງລາວ (LWU), ກະຊວງກະສິກຳ ແລະ ປ່າໄມ້ ແລະ ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ;
- ດຳລັດ ຂອງ ນາຍົກລັດຖະມົນຕີ ເລກທີ 112 ວ່າດ້ວຍ ການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ;
- ດຳລັດ ຂອງ ນາຍົກລັດຖະມົນຕີ ເລກທີ 115 ວ່າດ້ວຍ ສະມາຄົມທີ່ບໍ່ຫວັງຜົນກຳໄລ;
- ດຳລັດ ຂອງ ນາຍົກລັດຖະມົນຕີ ເລກທີ 136 ວ່າດ້ວຍ ສະຫະກອນ;
- ດຳລັດ ຂອງ ນາຍົກລັດຖະມົນຕີ ເລກທີ 192 ວ່າດ້ວຍ ການຊົດເຊີຍການຕັ້ງຖິ່ນຖານໃໝ່ທີ່ເກີດຈາກ ໂຄງການພັດທະນາ;
- ດຳລັດ ຂອງນາຍົກລັດຖະມົນຕີ ເລກທີ 46 ວ່າດ້ວຍ ການແກ້ໄຂຂໍ້ຂັດແຍ່ງຢູ່ຂັ້ນຮາກຖານ.

### 3.2 ສົນທິສັນຍາສາກົນທີ່ກ່ຽວຂ້ອງທີ່ ສປປ ລາວ ໄດ້ຮັບຮອງ.

- ຖະແຫຼງການ ຂອງ ສະຫະປະຊາຊາດ ວ່າດ້ວຍ ສິດທິຂອງຄົນພື້ນເມືອງ;
- ສົນທິສັນຍາ ວ່າດ້ວຍ ຊີວະນາໆພັນ;
- ສົນທິສັນຍາສາກົນ ວ່າດ້ວຍ ການລົບລ້າງທຸກຮູບການຂອງການແບ່ງແຍກເຊື້ອຊາດຜິວພັນ;
- ສົນທິສັນຍາສາກົນ ວ່າດ້ວຍ ການລົບລ້າງທຸກຮູບການຂອງການແບ່ງແຍກເພດຍິງ;
- ສົນທິສັນຍາສາກົນ ວ່າດ້ວຍ ສິດທິດ້ານເສດຖະກິດ, ສັງຄົມ ແລະ ວັດທະນາທຳ;
- ຂໍ້ຕົກລົງສາກົນ ວ່າດ້ວຍ ສິດຂອງປະຊາຊົນ ແລະ ດ້ານການເມືອງ;
- ກອບສົນທິສັນຍາ ຂອງສະຫະປະຊາຊາດ ວ່າດ້ວຍການປ່ຽນແປງດິນຟ້າອາກາດ.

## ພາກ II
## ການຈັດຕັ້ງປະຕິບັດ

### 1. ຂະບວນການໂດຍລວມ.

ຂະບວນການ FPIC ທົ່ວໄປປະກອບດ້ວຍການມີທີມງານ FPIC ຂັ້ນທ້ອງຖິ່ນ ເພື່ອຈັດຕັ້ງເວທີການເຜີຍແຜ່ຂໍ້ມູນ ແລະ ປຶກສາຫາລື ກັບບັນດາຊຸມຊົນທ້ອງຖິ່ນ (ບ້ານ) ບ່ອນທີ່ໂຄງການໄດ້ຖືກນຳເອົາໄປຈັດຕັ້ງປະຕິບັດ, ມັນມີຄວາມສຳຄັນຫລາຍໃນການຮັບປະກັນວ່າຂໍ້ມູນທີ່ສະໜອງໃຫ້ປະຊາຊົນນັ້ນຕ້ອງມີຄວາມຈະແຈ້ງ ແລະ ຄົບຖ້ວນ ເພື່ອວ່າຜູ້ເຂົ້າຮ່ວມທັງໝົດ (ແມ່ຍິງ ແລະ ຜູ້ຊາຍ) ທີ່ມາຈາກກຸ່ມຊົນເຜົ່າຕ່າງໆທີ່ມີຄວາມສ່ຽງທີ່ຈະໄດ້ຮັບຜົນກະທົບ ເຂົ້າໃຈຢ່າງລະອຽດ ແລະ ສາມາດຕັດສິນໃຈໄດ້ ວ່າຈະໃຫ້ຄວາມເຫັນດີເຫັນພ້ອມ ຫຼື ບໍ່ ຕໍ່ກັບໂຄງການ ຫຼື ທຸກແນວທາງປະຕິບັດ ແລະ ກິດຈະກຳໃຫຍ່ໆຂອງໂຄງການ. ບັນດາຊຸມຊົນທ້ອງຖິ່ນມີສິດສະເໜີຂໍຂໍ້ມູນເພີ່ມເຕີມໄດ້ທຸກເວລາ ຖ້າຫາກວ່າເຂົາເຈົ້າມີຄຳຖາມ ຫຼື ຂໍ້ສົງໄສກ່ຽວກັບການວາງແຜນ, ການຈັດຕັ້ງປະຕິບັດ ແລະ ຜົນກະທົບທີ່ອາດເກີດຂຶ້ນໄດ້ ຈາກໂຄງການທີ່ໄດ້ສະເໜີມາ. ເຂົາເຈົ້າຍັງມີສິດສະເໜີຂໍໃຫ້ມີການປຶກສາຫາລືເພີ່ມເຕີມກັບບັນດາພາກສ່ວນຕ່າງໆທີ່ກ່ຽວ ຂ້ອງກັບໂຄງການ ເປັນຕົ້ນແມ່ນ ຫ້ອງການກະສິກຳ ແລະ ປ່າໄມ້ເມືອງ.

ຕາມຫລັກການແລ້ວ, ຂະບວນການ FPIC ນີ້ແມ່ນມີຄວາມໝາຍວ່າ ບັນດາຊຸມຊົນທ້ອງຖິ່ນຈະມີເວລາພຽງພໍໃນການດຳເນີນການປຶກສາຫາລືດ້ວຍຕົນເອງ ເພື່ອໃຫ້ສາມາດຕັດສິນໃຈທີ່ຍອມຮັບໄດ້ ໂດຍສຽງສ່ວນຫລາຍ (ຢ່າງໜ້ອຍ ສອງສ່ວນສາມ) ຂອງແມ່ຍິງ ແລະ ຜູ້ຊາຍ ຈາກທຸກກຸ່ມຊົນເຜົ່າທັງໝົດທີ່ອາໄສຢູ່ໃນຊຸມຊົນທ້ອງຖິ່ນ. ປະຊາຊົນທ້ອງຖິ່ນບໍ່ຄວນຈະຖືກຮຽກຮ້ອງໃຫ້ຕົກລົງເຫັນດີແບບທັນທີທັນໃດໃນຕອນທ້າຍຂອງກອງປະຊຸມທີ່ນຳເຜີຍແຜ່ຂໍ້ມູນ ຫຼືປຶກສາຫາລື ເນື່ອງຈາກວ່າ ເຂົາເຈົ້າຈະຕ້ອງການເວລາຕື່ມອີກເພື່ອປຶກສາກັນພາຍໃນລະຫວ່າງເຂົາເຈົ້າເອງ.

ຂະບວນການລວມທັງໝົດຂອງ FPIC ແມ່ນກົນໄກການແກ້ໄຂຄຳຮ້ອງທຸກ ທີ່ເໝາະສົມ ຊຶ່ງຈະຕ້ອງໄດ້ຮັບການປຶກສາຫາລືກັບບັນດາຊຸມຊົນ ແລະ ອົງການຈັດຕັ້ງກ່ຽວຂ້ອງຢູ່ທ້ອງຖິ່ນ ເພື່ອໃຫ້ທຸກຄົນ (ແມ່ຍິງ ແລະ ຜູ້ຊາຍ) ຂອງກຸ່ມຊົນເຜົ່າທັງໝົດໄດ້ຮູ້ຢ່າງຈະແຈ້ງວ່າເຂົາເຈົ້າຈະຍື່ນຄຳຮ້ອງທຸກຢູ່ໃສ ຖ້າຫາກມີໃຜກໍຕາມທີ່ບໍ່ເຄົາລົບ ຕໍ່ກັບສິ່ງທີ່ໄດ້ຕົກລົງກັນແລ້ວກ່ຽວກັບໂຄງການ. ໃນກໍລະນີທີ່ມີຂໍ້ຂັດແຍ່ງ ຫຼື ການໂຕ້ຖຽງກັນ ພາຍໃນຊຸມຊົນທ້ອງຖິ່ນ ທີ່ເກີດຂຶ້ນຈາກຜົນຂອງການບໍ່ປະຕິບັດຕາມສັນຍາ ທີ່ກ່ຽວຂ້ອງກັບໂຄງການ, ມີຄວາມຄາດຫວັງໄວ້ວ່າໜ່ວຍງານໄກ່ເກ່ຍຂັ້ນບ້ານທີ່ໄດ້ຖືກສ້າງຕັ້ງຂຶ້ນແລ້ວນັ້ນ (ຕາມດຳລັດ ຂອງນາຍົກລັດຖະມົນຕີ ເລກທີ 46) ຈະສາມາດແກ້ໄຂກໍລະນີດັ່ງກ່າວໄດ້.

ສະເພາະໂຄງການ CliPAD, ເວທີເຜີຍແຜ່ຂໍ້ມູນ ແລະ ປຶກສາຫາລືຈະຕ້ອງໄດ້ຈັດຂຶ້ນຢ່າງໜ້ອຍສາມຄັ້ງຕໍ່ບ້ານ ແລະ ຈະຈັດເພີ່ມຂຶ້ນຕື່ມອີກກໍໄດ້ຕາມທີ່ຕ້ອງການຂອງສະພາບເງື່ອນໄຂຕົວຈິງ, ເວທີປຶກສາຫາລື FPIC ແຕ່ລະຄັ້ງຈະຕ້ອງໄດ້ເວົ້າເຖິງກິດຈະກຳຫຼັກໆຂອງໂຄງການ ທີ່ກ່ຽວຂ້ອງກັບການອອກແບບ, ວາງແຜນ ແລະ ຈັດຕັ້ງປະຕິບັດການຄຸ້ມຄອງນຳໃຊ້ປ່າໄມ້ ແລະ ທີ່ດິນ. ດັ່ງທີ່ກ່າວມາຂ້າງເທິງນັ້ນ, “ເວທີປຶກສາຫາລື” ແມ່ນ ຈະບໍ່ປົນເປກັບ “ກອງປະຊຸມຕັດສິນໃຈຂອງຊຸມຊົນທ້ອງຖິ່ນ”,

ເວທີສະໜອງຂໍ້ມູນ ແລະ ປຶກສາຫາລື ອາດຈະຈັດຂຶ້ນໃນຊ່ວງໄລຍະເວລາດຽວກັນ, ແຕ່ວ່າຖ້າບໍ່ມີການຮ້ອງຂໍເວລາເພີ່ມເຕີມໂດຍຊຸມຊົນແລ້ວການຕັດສິນໃຈອາດຈະເກີດຂຶ້ນໃນວັນດຽວກັນ. ທຸກໆຄັ້ງບັນດາຊຸມຊົນທ້ອງຖິ່ນຈະຕ້ອງມີເວລາທີ່ພຽງພໍ (ຊຶ່ງຂຶ້ນກັບຂະໜາດຂອງຊຸມຊົນ, ສິ່ງດັ່ງກ່າວນີ້ ອາດຈະໃຊ້ເວລາ 1 ຫາ 2 ອາທິດ ຫຼື ອາດຈະຫລາຍກວ່ານັ້ນ) ເພື່ອເຂົາເຈົ້າສາມາດແລກປ່ຽນໄຕ່ຕອງນຳກັນເອງ ແລະ ສາມາດຕັດສິນໃຈຕາມວິທີທາງຂອງເຂົາເຈົ້າເອງ. ກອງປະຊຸມເພື່ອຕັດສິນໃຈຂອງຊຸມຊົນທີ່ແຍກອອກຕ່າງຫາກນັ້ນ ຈະຖືກຈັດຂຶ້ນຕາມຫຼັງ ເພື່ອອອກສຽງເປັນເອກະພາບກັນ ແລ້ວມອບໝາຍໃຫ້ຜູ້ຕາງໜ້າຊຸມຊົນໄປແຈ້ງໝາກຜົນທີ່ໄດ້ຮັບຈາກການປຶກສາຫາລືພາຍໃນຂອງເຂົາເຈົ້າຕໍ່ກັບໜ່ວຍງານ FPIC ເພື່ອຊາບ.

ເວທີປຶກສາຫາລືເພື່ອສະໜອງຂໍ້ມູນ ແລະ ປຶກສາຫາລືຄັ້ງທຳອິດ ຄວນຈະຖືກຈັດຂຶ້ນພາຍຫລັງທີ່ໄດ້ສຳເລັດການວາງແຜນນຳໃຊ້ທີ່ດິນແບບມີສ່ວນຮ່ວມ ທີ່ໄດ້ຖືກຮັບຮອງຢ່າງເປັນທາງການ ໂດຍ ເຈົ້າເມືອງ ແລະ ແຜນນຳໃຊ້ທີ່ດິນຂັ້ນບ້ານດັ່ງແມ່ນໄດ້ສ້າງຂຶ້ນບົນພື້ນຖານການປຶກສາຫາລື ແລະ ຄວາມເຫັນດີເຫັນພ້ອມເປັນເອກະພາບພາຍໃນບ້ານ ແລະ ລະຫວ່າງບ້ານໃກ້ຄຽງ ແລະ ທີມງານການວາງແຜນນຳໃຊ້ທີ່ດິນຂອງລັດຖະບານ ກ່ຽວກັບທີ່ຕັ້ງ, ການນຳໃຊ້ທີ່ດິນຂອງບ້ານແນວໃດໃນປະຈຸບັນ ແລະ ອະນາຄົດ. ສະນັ້ນໜ່ວຍງານ FPIC ຈະບໍ່ເວົ້າຄືນໃໝ່ກ່ຽວກັບການສ້າງແຜນນຳໃຊ້ທີ່ຂັ້ນບ້ານ ແຕ່ຖ້າຫາກມີຄວາມຈຳເປັນ, ກໍສາມາດອ້າງອີງໃສ່ແຜນດັ່ງກ່າວໃນເວລາອຳນວຍຄວາມສະດວກການປຶກສາຫາລືຂອງຊາວບ້ານ. ເວທີປຶກສາຫາລືຄັ້ງທີ 1 ແມ່ນເພື່ອເຜີຍແຜ່ຂໍ້ມູນທັງໝົດ ກ່ຽວກັບໂຄງການໃຫ້ຊາວບ້ານໄດ້ຮັບຮູ້ພ້ອມທັງສະເໜີຂໍຄວາມເຫັນນຳຊາວບ້ານວ່າເຫັນດີເຫັນພ້ອມ ຈະຮັບເອົາໂຄງການມາຈັດຕັ້ງປະຕິບັດຢູ່ບ້ານ ຫລື ບໍ່, ຖ້າຊາວບ້ານຍັງຕ້ອງການເວລາເພື່ອໄປປຶກສາຫາລືຢູ່ພາຍໃນບ້ານຕື່ມກໍສາມາດເຮັດໄດ້, ແຕ່ບໍ່ຄວນໃຫ້ແກ່ຍາວເກີນກວ່າ 2 ອາທິດ. ໃນຕອນທ້າຍຂອງການປຶກສາຫາລືໜ່ວຍງານ FPIC ຕ້ອງເຮັດບົດບັນທຶກການປຶກສາຫາລື, ທີ່ບັນລະຍາຍເຖິງເນື້ອໃນ ແລະ ການຕົກລົງສຳຄັນໆໄວ້ເປັນຫລັກຖານ ແລະ ເປັນບ່ອນອີງເພື່ອດຳເນີນການຕໍ່ໄປໃນອະນາຄົດ.

ເວທີປຶກສາຫາລືຄັ້ງທີ 2 ຈະຖືກຈັດຂຶ້ນຫລັງຈາກທີ່ແຜນຄຸ້ມຄອງຈັດສັນປ່າໄມ້ບ້ານ 5 ປີ ແລະ ແຜນດຳເນີນງານປ່າໄມ້ປະຈຳປີໄດ້ຮັບການສ້າງຂຶ້ນ ແລະ ໄດ້ຖືກຮັບຮອງຢ່າງເປັນທາງການຈາກຫ້ອງການກ່ຽວຂ້ອງຂັ້ນເມືອງເປັນທີ່ຮຽບຮ້ອຍແລ້ວ. ຂະບວນການສ້າງແຜນຄຸ້ມຄອງຈັດສັນປ່າໄມ້ບ້ານແມ່ນໄດ້ດຳເນີນໄປເປັນຂັ້ນຕອນ ແລະ ບາດກ້າວຕາມທີ່ໄດ້ກຳນົດໄວ້ຢູ່ໃນປຶ້ມຄູ່ມືກ່ຽວກັບການຄຸ້ມຄອງຈັດສັນປ່າໄມ້ບ້ານ, ຊຶ່ງຊາວບ້ານໄດ້ເຂົ້າຮ່ວມແຕ່ຕົ້ນຕະຫລອດປາຍໃນນັ້ນໄດ້ມີສ່ວນຮ່ວມໃນການອອກແບບການສຳຫລວດປ່າໄມ້, ການເກັບກຳຂໍ້ມູນພາກສະໜາມ ແລະ ການກຳນົດກິດຈະກຳຄຸ້ມຄອງຈັດສັນປ່າໄມ້. ຂະບວນການດັ່ງກ່າວຄາດວ່າຈະໃຊ້ເວລາປະມານ 2 ຫາ 4 ອາທິດ ພາຍຫລັງທີ່ໄດ້ຮັບຄວາມເຫັນດີເຫັນພ້ອມ ຂອງຊາວບ້ານຕໍ່ກັບໂຄງການຢູ່ເວທີປຶກສາຫາຫລືຄັ້ງທີ 1. ສະນັ້ນຈຶ່ງເວົ້າໄດ້ວ່າຊາວບ້ານໄດ້ຮັບໂອກາດຫລາຍສົມຄວນໃນການເຂົ້າຮ່ວມຂະບວນການ ແລະ ມີຄວາມເຂົ້າໃຈຢ່າງດີວ່າ ຊັບພະຍາກອນປ່າໄມ້ເຂົາເຈົ້າຈະມີການຄຸ້ມຄອງ ແລະ ນຳໃຊ້ແນວໃດ. ຈຸດປະສົງຕົ້ນຕໍຂອງເວທີປຶກສາຫາລືຄັ້ງທີ 2 ນີ້ ແມ່ນເພື່ອນຳສະເໜີຮ່າງສັນຍາວ່າດ້ວຍການຄຸ້ມຄອງຈັດສັນປ່າໄມ້ບ້ານ ໂດຍໜ່ວຍງານ FPIC ໃຫ້ຊາວບ້ານທັງໝົດຮັບຊາບ, ສົນທະນາ, ແລກປ່ຽນຄຳຄິດເຫັນ ແລະ ປັບປຸງ,

ຖ້າຈຳເປັນ, ເນື້ອໃນຂອງສັນຍາຕາມຄວາມເໝາະສົມ ເພື່ອໃຫ້ສອດຄ່ອງກັບສະພາບຕົວຈິງ. ເຊັ່ນດຽວກັນໃນຕອນທ້າຍຂອງເວທີປຶກສາຫາລື, ຊາວບ້ານໄດ້ຮັບການຖາມວ່າເຂົາເຈົ້າເຂົ້າໄດ້ເຫັນດີ ແລະ ພໍໃຈກັບສັນຍານີ້ບໍ? ຫຼືວ່າຕ້ອງເວລາເພີ່ມເຕີມເພື່ອປຶກສາຫາລືພາຍໃນ, ເຂົາກໍສາມາດເຮັດໄດ້ແຕ່ບໍ່ຄວນໃຫ້ດົນກວ່າ 1 ອາທິດ, ບົດບັນທຶກເວທີປຶກສາຫາລືຄັ້ງທີ 2 ກໍຕ້ອງໄດ້ຂຽນຂຶ້ນເໝືອນດັ່ງການປຶກສາຫາລືຄັ້ງທີ 1.

ໃນກໍລະນີທີ່ຊາວບ້ານສ່ວນຫລາຍຫາກເຫັນດີເຫັນພ້ອມນຳກັນແລ້ວ ເວທີປຶກສາຫາລື ຄັ້ງທີ 3 ກໍສາມາດຈັດຂຶ້ນໃນມື້ຕໍ່ໄປໂລດ ເພື່ອບໍ່ໃຫ້ໜ່ວຍງານ FPIC ເສຍເວລາໜີໄປທາງອື່ນ. ຜູ້ທີ່ເຂົ້າຮ່ວມເວທີປຶກສາຫາລືຄັ້ງທີ 3 ລວມມີເຖົ້າແກ່ແນວໂຮມ, ຜູ້ຊົງຄຸນວຸດທິ, ຊາວໜຸ່ມ, ສະຫະພັນແມ່ຍິງ ແລະ ອຳນາດການປົກຄອງບ້ານ ຊຶ່ງຈະໄດ້ຮັບຟັງ ແລະ ສົນທະນາກັນກ່ຽວກັບກົນໄກການແກ້ໄຂຂໍ້ຂັດແຍ້ງຂັ້ນບ້ານກ່ອນຈະມີການຈັດຕັ້ງພິທີເຊັນສັນຍາວ່າດ້ວຍການຄຸ້ມຄອງຈັດສັນປ່າໄມ້ບ້ານ, ບົດບັນທຶກເວທີການປຶກສາຫາລືຄັ້ງທີ 3 ກໍຕ້ອງໄດ້ຂຽນໄວ້ເຊັ່ນດຽວກັນ ເພື່ອເປັນບ່ອນອີງໃນຕໍ່ໜ້າ.

ກອງປະຊຸມເພີ່ມເຕີມສຳລັບການປຶກສາຫາລືກ່ຽວກັບການສະໜອງຂໍ້ມູນຄວນຈະໄດ້ຈັດຂຶ້ນຕາມຄວາມຈຳເປັນລະຫວ່າງເວທີປຶກສາຫາລືແຕ່ລະຄັ້ງ ແລະ ໂດຍສະເພາະໃນກໍລະນີ ທີ່ອາດມີການຮ້ອງຂໍຈາກບັນດາຊຸມຊົນທ້ອງຖິ່ນ ໃນເມື່ອມີຄວາມສົງໃສ, ຄຳຖາມ ຫຼື ຂໍ້ຕຳນິຈົ່ມວ່າ ກ່ຽວກັບຂະບວນການຈັດຕັ້ງປະຕິບັດໂຄງການ. ໃນທຸກເວລາ, ຜູ້ຍິງ ແລະ ຜູ້ຊາຍມີສິດສະເໜີຂໍເວລາເພີ່ມເຕີມ ເພື່ອຄົ້ນຄວ້າພິຈາລະນາ ຫຼື ສະເໜີຂໍການຊ່ວຍເຫຼືອດ້ານເຕັກນິກ ຫຼື ຊ່ຽວ ຊານອື່ນໆ ລວມທັງຈາກໂຄງການ ເພື່ອຊ່ວຍອະທິບາຍລາຍລະອຽດເພີ່ມເຕີມໃຫ້ເຂົາເຈົ້າຮູ້ກ່ອນເຂົາເຈົ້າຕັດສິນໃຈ ວ່າຈະຕອບຮັບ ຫຼື ບໍ່ຕໍ່ທັງໝົດ ຫຼື ບາງສ່ວນຂອງກິດຈະກຳໂຄງການທີ່ຄາດໄວ້ວ່າຈະໄດ້ຈັດຕັ້ງປະຕິບັດໃນພື້ນທີ່ຂອງເຂົາເຈົ້າ.

## 2. ສະຖານທີ່ຈັດເວທີປຶກສາຫາລື FPIC.

ໃນທຸກໆຄັ້ງສະຖານທີ່ຈັດເວທີປຶກສາຫາລືຈະໄດ້ເລືອກເອົາຈາກສະຖານທີ່ຢູ່ພາຍໃນຊຸມຊົນ. ຂຶ້ນກັບສະພາບຂອງທ້ອງຖິ່ນນັ້ນໆ, ຫ້ອງການນາຍບ້ານ, ເຮືອນ, ໂຮງຮຽນ, ວັດ ຫຼື ເດີນບ້ານທີ່ເໝາະສົມ ຖືວ່າເປັນສະຖານທີ່ໆເໝາະສົມ. ມາດຖານຕົ້ນຕໍ ແມ່ນວ່າສະຖານທີ່ສາມາດຮອງຮັບເອົາຜູ້ເຂົ້າຮ່ວມເປັນຈຳນວນຫຼວງຫລາຍໄດ້ຢ່າງສະດວກສະບາຍ (ດີແທ້ແມ່ນໃຫ້ຈັດເປັນຮູບວົງມົນ ຫຼື ຮູບຕົວ U ດີກວ່າຈະເປັນຮູບແບບຫ້ອງປະຊຸມທາງການ ຫຼື ເປັນແບບລັກສະນະຢູ່ໃນໂຮງຮຽນ). ສະຖານທີ່ໆໄດ້ເລືອກເອົາຈະຕ້ອງເປັນທີ່ຍອມຮັບ ແລະ ສາມາດເຂົ້າເຖິງໄດ້ງ່າຍ ສຳລັບ ແມ່ຍິງ ແລະ ຜູ້ຊາຍຈາກກຸ່ມຊົນເຜົ່າທັງໝົດ ແລະ ບ້ານນ້ອຍໆໃນຊຸມຊົນທ້ອງຖິ່ນ.

ສະຖານທີ່ຈັດວາງເວທີປຶກສາຫາລືຈະຕ້ອງຈັດໃນລັກສະນະທີ່ສົ່ງເສີມໃຫ້ມີບັນຍາກາດແບບເປັນກັນເອງທີ່ເຮັດໃຫ້ໝົດທຸກຄົນຮູ້ສຶກຢາກສົນທະນາ, ຕັ້ງຄຳຖາມ ແລະ ອອກຄຳຄິດເຫັນຂອງຕົນຢ່າງສະບາຍໃຈ. ເພື່ອແນໃສ່ໃຫ້ແມ່ຍິງຈາກທຸກກຸ່ມຊົນເຜົ່າມີໂອກາດຢ່າງພຽງພໍໃນການປຶກສາຫາລື ແລະ ເຂົ້າໃຈບັນຫາທີ່ຈຳເປັນທັງໝົດ ແລະ ຖ້າເປັນໄປໄດ້, ຄວນຈະຈັດກອງປະຊຸມເປັນສອງກຸ່ມ ໂດຍແຍກເປັນກຸ່ມແມ່ຍິງ ແລະ ກຸ່ມຜູ້ຊາຍ, ຊຶ່ງດີແທ້ຄວນໃຫ້ຈັດຂຶ້ນພ້ອມໆກັນ. ໂດຍປົກກະຕິແລ້ວ, ແມ່ຍິ

ງແມ່ນມີປະສົບການໜ້ອຍກວ່າໃນການອອກຄຳຄິດຄຳເຫັນ ຫຼື ຕັ້ງຄຳຖາມຢູ່ໃນເວທີປຶກສາຫາລື ແຕ່ຄາດວ່າເຂົາເຈົ້າຈະສາມາດເຮັດໄດ້ດີຢູ່ຖ້າຫາກວ່າເຂົາເຈົ້າບໍ່ໄດ້ຢູ່ຕໍ່ໜ້າຜູ້ຊາຍ ແລະ ເຈົ້າໜ້າທີ່ຜູ້ຊາຍ. ສຳລັບການປະກອບສ່ວນທີ່ສຳຄັນ ຂອງແມ່ຍິງຕໍ່ການຄຸ້ມຄອງຈັດສັນ ແລະ ປົກປັກຮັກສາຊັບພະຍາກອນປ່າໄມ້ຢູ່ ສປປ ລາວ, ຖືວ່າເປັນສິ່ງຈຳເປັນທີ່ຈະເຮັດໃຫ້ເຂົາເຈົ້າມີຂໍ້ມູນທຸກຢ່າງທີ່ຈຳເປັນທີ່ກ່ຽວຂ້ອງກັບການວາງແຜນຄຸ້ມຄອງຈັດສັນທີ່ດິນ ແລະ ປ່າໄມ້ ໃນພື້ນທີ່ຂອງເຂົາເຈົ້າ.

ໜ່ວຍງານ FPIC ຂັ້ນເມືອງ ຫຼື ໜ່ວຍງານ FPIC ທີ່ຄ້າຍຄືກັນ, ຈະຕ້ອງເປັນຜູ້ອຳນວຍຄວາມສະດວກໃຫ້ແກ່ການປຶກສາຫາລືໃນທຸກດ້ານຂອງໂຄງການ. ໜ່ວຍງານ FPIC ມີໜ້າທີ່ອັນສຳຄັນໃນການສ້າງ ແລະ ຮັກສາບັນຍາກາດທີ່ດີ ພ້ອມທັງເປີດກວ້າງໃຫ້ແມ່ຍິງ ແລະ ຜູ້ຊາຍ ຈາກກຸ່ມຊົນເຜົ່າທັງໝົດຮູ້ສຶກສະບາຍໃຈໃນການອອກຄຳຄິດເຫັນ, ແລກປ່ຽນແນວຄວາມຄິດກັບຜູ້ອຳນວຍຄວາມສະດວກ, ເປັນກັນເອງ ແລະ ຮູ້ສຶກສະບາຍໃຈໃນການຖາມເພື່ອຄວາມກະຈ່າງແຈ້ງ ກ່ຽວກັບຫົວຂໍ້ທີ່ຢູ່ໃນການສົນທະນາ. ເຖິງຢ່າງໃດກໍຕາມ, ບໍ່ໄດ້ຄາດຫວັງວ່າໜ່ວຍງານ FPIC ຈະມີຄວາມຮູ້ ແລະ ຄວາມເຂົ້າໃຈຢ່າງເຕັມສ່ວນກ່ຽວກັບທຸກບັນຫາ ຫຼື ຄຳຖາມດ້ານເຕັກນິກ ທີ່ຍົບຍົກຂຶ້ນມາ. ເມື່ອໃດກໍຕາມ ທີ່ໜ່ວຍງານໄດ້ຮັບຄຳຖາມ ຫຼື ຄຳຄິດເຫັນທີ່ຕົນບໍ່ສາມາດຕອບໄດ້, ເຂົາເຈົ້າຈະຕ້ອງບັນທຶກໄວ້ ແລະ ບອກວ່າຈະໃຫ້ຊ່ຽວຊານດ້ານວິຊາການທີ່ເໝາະສົມມາໃຫ້ຄຳຕອບໃນພາຍຫຼັງ.

### 3. ການກະກຽມຂະບວນການປຶກສາຫາລື FPIC.

ເນື່ອງຈາກວ່າເວທີປຶກສາຫາລືເຫຼົ່ານີ້ ແມ່ນເຫດການທີ່ສຳຄັນໃນການປະກອບສ່ວນເຂົ້າໃນຂະບວນການປືສາຫາລື ກັບບັນດາຊຸມຊົນທ້ອງຖິ່ນໃຫ້ປະສົບຜົນສຳເລັດ, ຄວາມພ້ອມ ຂອງໜ່ວຍງານ FPIC ຈະຕ້ອງໄດ້ຮັບຄວາມເອົາໃຈໃສ່ຢ່າງສູງ. ການກະກຽມໃຫ້ດີໃນທຸກດ້ານແມ່ນເປັນກະແຈ ຂອງເວທີປຶກສາຫາລືທີ່ປະສົບຜົນສຳເລັດ ຊຶ່ງມີ 5 ບາດກ້າວໃຫຍ່ໆໃນການກະກຽມຄືດັ່ງລຸ່ມນີ້.

**ບາດກ້າວ 1: ສ້າງຕັ້ງໜ່ວຍງານ FPIC.**

ໜ່ວຍງານອຳນວຍຄວາມສະດວກດ້ານ FPIC ໜຶ່ງໜ່ວຍ ທີ່ປະກອບດ້ວຍ 4 ຄົນ (ດີແທ້ແມ່ນແມ່ຍິງສອງ ແລະ ຜູ້ຊາຍສອງ) ມີໜ້າທີ່ຮັບຜິດຊອບຕໍ່ຂະບວນການປຶກສາຫາລື FPIC ໃນ ທ້ອງຖິ່ນ. ໜ່ວຍງານນີ້ຈະຕ້ອງຖືກສ້າງຕັ້ງຂຶ້ນ, ໄດ້ຮັບການແນະນຳ ແລະ ໄດ້ຮັບການຝຶກອົບຮົມເປັນຢ່າງດີ ແລະ ພຽງພໍ ໂດຍມີການປະກອບສ່ວນ ຂອງໜ່ວຍງານຝຶກອົບຮົມດ້ານ FPIC. ການແນະນຳ ແລະ ການຝຶກອົບຮົມ ແກ່ໜ່ວຍງານແມ່ນສຳຄັນຫລາຍ ເພາະວ່າໜ່ວຍງານອາດຈະດຳເນີນຈັດເວທີປຶກສາຫາລື ໂດຍ ບໍ່ມີຄວາມຫຍຸ້ງຍາກສັບສົນ (ໃຫ້ເບິ່ງ ບາດກ້າວ 2 ຂ້າງລຸ່ມ). ໜ່ວຍງານ FPIC ອາດຈະປະກອບດ້ວຍບຸກຄະລາກອນ ຂອງຝ່າຍຕ່າງໆດັ່ງຕໍ່ໄປນີ້:

1) ສອງຄົນ ຈາກ ແນວລາວສ້າງຊາດ ເມືອງ;
2) ສອງຄົນ ຈາກ ສະຫະພັນແມ່ຍິງເມືອງ;

3) ຖ້າເປັນໄປໄດ້, ຜູ້ຕ່າງໜ້າອົງການຈັດຕັ້ງສັງຄົມທີ່ເໝາະສົມ, ພະນັກງານທ້ອງຖິ່ນ ຂອງອົງການສາກົນ ເພື່ອການພັດທະນາສາກົນ, ພະນັກງານ ຫຼື ນັກຮຽນ, ອາວຸໂສ ຈາກສະຖາບັນຄົ້ນຄ້ວາ ຫຼື ສະຖານບັນວິຊາການ.

ໜ່ວຍງານອຳນວຍຄວາມສະດວກຄວນຈະມີຢ່າງໜ້ອຍສອງຄົນທີ່ສາມາດສື່ສານຢ່າງຄ່ອງແຄ້ວເປັນພາສາຫຼັກທີ່ໃຊ້ກັບຊຸມຊົນທ້ອງຖິ່ນ. ໜຶ່ງໃນຈຳນວນຄົນເຫຼົ່ານີ້ ຈະຕ້ອງເປັນແມ່ຍິງຖ້າບໍ່ໄດ້ທັງສອງຄົນຕາມທີ່ຢາກໄດ້.

ຢູ່ໃນສະພາບການສ່ວນຫລາຍ, ຖືວ່າເປັນຫຼັກການປະຕິບັດທີ່ດີຂອງສາກົນທີ່ຈະລວມເອົາແມ່ຍິງ ຫລື ຜູ້ຊາຍເຂົ້າໃນໜ່ວຍງານ FPIC ຜູ້ທີ່ມາຈາກການຈັດຕັ້ງເປັນກາງຕໍ່ກັບໂຄງການ ຫລື ມີບົດບາດຕິດພັນກັບການປ້ອງກັນສິດຜົນປະໂຫຍດຂອງປະຊາຊົນ. ເມື່ອພິຈາລະນາເບິ່ງສະພາບການຢູ່ພາຍໃນ ສປປ ລາວ, ໜ່ວຍງານປະສົມທີ່ລວມເອົາອົງການຈັດຕັ້ງມະຫາຊົນ ແລະ ອົງການຈັດຕັ້ງສັງຄົມ ອາດຈະຖືວ່າເປັນທາງເລືອກທີ່ເໝາະສົມ ຢູ່ໃນທຸກກໍລະນີ, ແນວລາວສ້າງຊາດຖືວ່າເປັນອົງການຈັດຕັ້ງນຳພາ.

**ບາດກ້າວ 2: ແນະນຳ ແລະ ຝຶກອົບຮົມໃຫ້ໜ່ວຍງານ FPIC.**

ບຸກຄົນທີ່ຖືກແຕ່ງຕັ້ງໃຫ້ເຂົ້າຢູ່ໃນໜ່ວຍງານ FPIC ຂັ້ນທ້ອງຖິ່ນຈະຕ້ອງໄດ້ຮັບຄຳແນະນຳ ແລະ ການຝຶກອົບຮົມຢ່າງພຽງພໍ ຈາກໜ່ວຍງານຄູຝຶກ FPIC ເພື່ອໃຫ້ຮູ້ ແລະ ເຂົ້າໃຈເຖິງຄວາມສຳຄັນ ແລະ ຄວາມຈຳເປັນຂອງຂະບວນການ FPIC ທັງໝົດ ໂດຍສະເພາະໃນດ້ານຫຼັກການ, ຂະບວນການ ແລະ ເນື້ອໃນ. ມັນສຳຄັນທີ່ສຸດທີ່ໜ່ວຍງານທ້ອງຖິ່ນໄດ້ຮັບການຝຶກອົບຮົມ ບໍ່ວ່າຈະເປັນເນື້ອໃນ ແລະ ວິທີການອຳນວຍຄວາມສະດວກ, ໜ່ວຍງານຈະຕ້ອງໄດ້ຮັບການຝຶກອົບຮົມ ເພື່ອໃຫ້ເຂົ້າໃຈກ່ຽວກັບໂຄງການ ແລະ ບັນດາກິດຈະກຳທີ່ໄດ້ສະເໜີຂຶ້ນມາທາງດ້ານເນື້ອໃນ, ຄວາມເປັນມາ, ຈຸດປະສົງ, ຜົນປະໂຫຍດ ແລະ ຜົນກະທົບທັງໃນໄລຍະສັ້ນ ແລະ ໄລຍະຍາວ.

ໜ່ວຍງານ FPIC ຈະຕ້ອງເຂົ້າໃຈການປະຕິບັດທີ່ດີສຳລັບວຽກການອຳນວຍຄວາມສະດວກຢູ່ທ້ອງຖິ່ນ ເພື່ອໃຫ້ມີຜົນຮັບທາງບວກ ແລະ ມີປະສິດທິຜົນ. ໃນທີ່ສຸດ, ໜ່ວຍງານຈະຕ້ອງເຂົ້າໃຈວ່າວຽກງານ FPIC ແລະ ແນວຄວາມຄິດຂອງໂຄງການສອດຄ່ອງແນວໃດກັບທິດຊີ້ນຳ, ນະໂຍບາຍ ແລະ ບັນດານິຕິກຳຂອງລັດ. ແຕ່ເຖິງຢ່າງໃດກໍຕາມ, ມັນບໍ່ແມ່ນໜ້າວຽກຂອງໜ່ວຍງານ FPIC ທີ່ຈະເຜີຍແຜ່ນະໂຍບາຍ, ກົດໝາຍ ແລະ ລະບຽບການ, ມັນກໍບໍ່ແມ່ນວຽກຂອງໜ່ວຍງານ FPIC ທີ່ຈະດຳເນີນການປູກຈິດສຳນຶກ ກ່ຽວກັບການປົກປັກຮັກສາສິ່ງແວດລ້ອມ, ການປ່ຽນແປງຂອງດິນຟ້າອາກາດ ຫຼື ຫົວຂໍ້ອື່ນໆນັ້ນ. ສິ່ງນີ້ເປັນໜ້າວຽກທີ່ສຳຄັນ ແລະ ຈຳເປັນຈະຕ້ອງໄດ້ປະຕິບັດໃນເວລາແຕກຕ່າງກັບວຽກງານ FPIC.

ການຝຶກອົບຮົມຄວນຈະຖືກດຳເນີນເປັນຫຼາຍພາກ: ການແນະນຳແນວທາງ ແລະ ທິດສະດີອາດຈະດຳເນີນຢູ່ໃນຫ້ອງຮຽນລວມທັງຂໍ້ມູນທີ່ຈຳເປັນກ່ຽວກັບໂຄງການ ແລະ ການປະຕິບັດຕົວຈິງໃນພາກສະໜາມກ່ຽວກັບທັກສະໃນການນຳສະເໜີ ແລະ ການອຳນວຍຄວາມສະດວກ. ໜ້າວຽກຕົ້ນຕໍຂອງທີມງານ FPIC ແມ່ນການໃຫ້ຄວາມສະດວກແກ່ ແມ່ຍິງ ແລະ ຜູ້ຊາຍ ທີ່ມາຈາກທຸກກຸ່ມຊົນເຜົ່າ

ທີ່ຢູ່ໃນຊຸມຊົນທ້ອງຖິ່ນ ເພື່ອໃຫ້ເຂົ້າໃຈບັນຫາທີ່ສຳຄັນຫຼາຍໆຢ່າງ FPIC ມີຄວາມໝາຍແນວໃດ, ການວາງແຜນນຳໃຊ້ທີ່ດິນ ແລະ ການຄຸ້ມຄອງຈັດສັນປ່າໄມ້ມີຄວາມໝາຍແນວໃດ, ການວາງແຜນດັ່ງກ່າວມີຜົນກະທົບແນວໃດຕໍ່ຊີວິດການເປັນຢູ່ຂອງປະຊາຊົນ, ຈຸດປະສົງ ຂອງໂຄງການ, ເປັນຫຍັງໂຄງການຢາກມາດຳເນີນຢູ່ໃນພື້ນທີ່ໆຈັດສັນໃຫ້ປະຊາຊົນ, ຜົນກະທົບທາງບວກ ແລະ ທາງລົບ ທີ່ອາດຈະເກີດຂຶ້ນໄດ້ໃນການຍອມຮັບຕໍ່ກັບປະເພດການນຳໃຊ້ທີ່ດິນອັນໃດໜຶ່ງໃນພື້ນທີ່ໆໄດ້ຖືກຈັດສັນໃຫ້ແລ້ວ, ຜົນກະທົບທີ່ອາດເກີດຂຶ້ນໄດ້ຈາກໂຄງການ ແລະ ອາດຈະມີທາງເລືອກຫຍັງແດ່.

ສະມາຊິກຂອງໜ່ວຍງານຄູຝຶກອາດຈະມາຈາກອົງການຈັດຕັ້ງຕ່າງໆແຕ່ຄວນຈະລວມເອົາຄົນຈາກໂຄງການເອງ (ອະທິບາຍກ່ຽວກັບແນວຄວາມຄິດຂອງໂຄງການ, ບັນດາກິດຈະກຳ ແລະ ອື່ນໆທີ່ຄ້າຍໆຄືກັນ), ແນວລາວສ້າງຊາດ, ອົງການຈັດຕັ້ງສັງຄົມ ຫຼື ສະມາຄົມທີ່ບໍ່ຫາຜົນກຳໄລ ທີ່ມີຄວາມສາມາດໃນການອຳນວຍຄວາມສະດວກ ຫຼື ການພັດທະນາແບບມີສ່ວນຮ່ວມ ແລະ ບາງທີຖ້າເປັນໄປໄດ້ ແມ່ນສະຖາບັນຄົ້ນຄົ້ນ ຫລື ຝຶກອົບຮົມ. ມາດຖານຕົ້ນຕໍສຳລັບສະມາຊິກ ໜ່ວຍງານຄູຝຶກແມ່ນຄູຝຶກຈະຕ້ອງມີຄວາມເຂົ້າໃຈຢ່າງເລິກເຊິ່ງ ກ່ຽວກັບໂຄງການ ແລະ ສາມາດອະທິບາຍໄດ້ຢ່າງງ່າຍດາຍ, ມີຄວາມເຂົ້າໃຈຢ່າງເລິກເຊິ່ງກ່ຽວກັບປ່າໄມ້ ແລະ ບັນຫາການວາງແຜນນຳໃຊ້ທີ່ດິນ ຢູ່ ສປປ ລາວ ແລະ ມີປະສົບການໂດຍກົງກ່ຽວກັບແນວທາງປະຕິບັດການປຶກສາຫາລື ແລະ ການວາງແຜນແບບມີສ່ວນຮ່ວມດ້ານບົດບາດ ຍິງ-ຊາຍ ຢູ່ ສປປ ລາວ (ບໍ່ໄດ້ຄາດຫວັງວ່າຄົນຜູ້ໜຶ່ງຈະໄດ້ຕາມມາດຖານທັງໝົດເຫຼົ່ານີ້ ແຕ່ທີມງານຄູຝຶກຫຼາຍຄົນ ລວມເປັນກຸ່ມຈຳເປັນຕ້ອງໄດ້ຕາມມາດຖານເຫຼົ່ານີ້).

ຫຼັງຈາກໜ່ວຍງານ FPIC ໄດ້ຮັບການຝຶກອົບຮົມຢ່າງພຽງພໍແລ້ວ, ກໍມີຄວາມພ້ອມ ທີ່ຈະກ້າວໄປຫາບາດກ້າວ ທີ 3[2] ຕໍ່ໄປ.

**ບາດກ້າວ 3: ການກະກຽມເວທີປຶກສາຫາລື FPIC.**

ບາດກ້າວ 3 ປະກອບດ້ວຍການກະກຽມເວທີປຶກສາຫາລື FPIC ໃນທັນທີກັບບັນດາຊຸມຊົນທ້ອງຖິ່ນໂລດ ແລະ ລວມມີການປະສານງານກ່ຽວກັບເວລາຈັດເວທີປຶກສາຫາລື, ໂດຍຮັບປະກັນໃຫ້ມີເອກະສານ ແລະ ສິ່ງຂອງອື່ນໆ ທີ່ຈຳເປັນ, ການກະກຽມງົບປະມານ ແລະ ອື່ນໆ. ຄາດວ່າຫ້ອງການແນວລາວສ້າງຊາດຂັ້ນເມືອງ ຈະເປັນຜູ້ຮັບຜິດ ຊອບຫຼັກຕໍ່ການກະກຽມ, ເຖິງແມ່ນວ່າອົງການອື່ນໆກໍມີສ່ວນຮ່ວມໃນການດຳເນີນເວທີປຶກສາຫາລືນຳກັນກໍຕາມ.

ເພື່ອຮັບປະກັນວ່າການກະກຽມໄດ້ດຳເນີນໄປຢ່າງຖືກຕ້ອງ, ຈະຕ້ອງໃຫ້ເວລາກະກຽມສອງ ຫາ ສີ່ອາທິດ (ໂດຍສະເພາະສຳລັບເວທີປຶກສາຫາລືເບື້ອງຕົ້ນ).

**ວຽກປະສານງານ:**

ແນວລາວສ້າງຊາດຂັ້ນເມືອງ ຈະຕ້ອງຮັບຜິດຊອບການປະສານງານດັ່ງຕໍ່ໄປນີ້:

- ສະເໜີຈຸດປະສົງຂອງເວທີປຶກສາຫາລື FPIC ຕໍ່ອຳນາດການປົກຄອງບ້ານພ້ອມທັງ ຕັດສິນໃຈວ່າຈະຈັດເວລາໃດເໝາະສົມ. ສຳລັບ ວັນ ແລະ ເວລາຂອງການປຶກສາຫາລື, ແມ່ນຕ້ອງອີງໃສ່

[2] ບົດແນະນຳ ເຫຼົ່ານີ້ ບໍ່ໄດ້ກວມເອົາລາຍລະອຽດ ການຝຶກອົບຮົມ ຂອງໜ່ວຍງານ FPIC; ຄວນຈະມີບົດແນະນຳ ຫຼື ຄູ່ມືທີ່ແຍກຕ່າງຫາກສຳລັບຈຸດປະສົງນີ້.

ເວລາຫວ່າງຂອງແມ່ຍິງ ແລະ ຜູ້ຊາຍໃນຊຸມຊົນທ້ອງຖິ່ນເປັນສ່ວນໃຫຍ່ (ຕົວຢ່າງ: ໃນໄລຍະເວລາທີ່ມີຄວາມຕ້ອງການແຮງງານສູງໃນລະດູການເຮັດກະສິກຳຄວນຈະຫຼີກເວັ້ນ);[3]

- ສະເໜີ ຫຼື ຮຽກຮ້ອງໃຫ້ອຳນາດການປົກຄອງບ້ານເລືອກສະຖານທີ່ປຶກສາຫາລືສອງບ່ອນ: ບ່ອນໜຶ່ງ ສຳລັບ ແມ່ຍິງ ແລະ ອີກບ່ອນໜຶ່ງສຳລັບຜູ້ຊາຍ. ສະຖານທີ່ໆຈະເລືອກແມ່ນຂຶ້ນກັບສິ່ງທີ່ມີຢູ່ໃນທ້ອງຖິ່ນ ແລະ ຄວາມເໝາະສົມ;
- ສະເໜີ ຫຼື ຮຽກຮ້ອງໃຫ້ອຳນາດການປົກຄອງບ້ານລາຍງານຂໍ້ມູນຢ່າງເໝາະສົມແກ່ ແມ່ຍິງ ແລະ ຜູ້ຊາຍ ທີ່ເປັນຜູ້ໃຫຍ່ໝົດທຸກຄົນກ່ຽວກັບການປຶກສາຫາລື FPIC. ອຳນາດການປົກຄອງບ້ານຈຳເປັນຈະຕ້ອງເຂົ້າໃຈຢ່າງຈະແຈ້ງວ່າຜູ້ໃຫຍ່ທັງໝົດ (ອາຍຸ ຢ່າງໜ້ອຍ 15 ປີ) ຖືກເຊີນເຂົ້າຮ່ວມ. ແມ່ຍິງຈະຕ້ອງຖືກເຊີນໃຫ້ມາແບບສະເພາະເຈາະຈົງ. ຖ້າວ່າຊຸມຊົນທ້ອງຖິ່ນຫາກມີບ້ານນ້ອຍຫຼາຍບ້ານ ຫຼື ມີຫຼາຍກຸ່ມຊົນເຜົ່າ, ແມ່ຍິງ ແລະ ຜູ້ຊາຍທັງໝົດຈາກບັນດາບ້ານນ້ອຍ ແລະ ຈາກຊົນເຜົ່າທັງໝົດຈະຕ້ອງຖືກເຊີນໃຫ້ເຂົ້າຮ່ວມ;
- ແຈ້ງໃຫ້ອຳນາດການປົກຄອງບ້ານຊາບວ່າຢ່າງໜ້ອຍສຳລັບການປຶກສາຫາລື FPIC ຄັ້ງທຳອິດ, ຕ້ອງການໃຫ້ມີແມ່ຍິງ ແລະ ຜູ້ຊາຍກວມຢ່າງໜ້ອຍ 60% ໃນການເຂົ້າຮ່ວມ ເວທີປຶກສາຫາລື (ລວມມີ 60% ຂອງ ແຕ່ລະກຸ່ມຊົນເຜົ່າທີ່ອາໃສຢູ່ໃນຊຸມຊົນທ້ອງຖິ່ນ);
- ສະເໜີ ຫຼື ຮຽກຮ້ອງໃຫ້ອຳນາດການປົກຄອງບ້ານ ແລະ ສະພັນແມ່ຍິງບ້ານມີການຈັດຕັ້ງກັນເບິ່ງແຍງຮັກສາເດັກນ້ອຍແບບຊົ່ວຄາວໃນມື້ທີ່ມີເວທີປຶກສາຫາລື ເພື່ອໃຫ້ແມ່ຍິງສາມາດເຂົ້າຮ່ວມການປຶກສາຫາລືໄດ້ຢ່າງສະ ດວກສະບາຍ ໂດຍທີ່ເຂົາເຈົ້າບໍ່ຈຳເປັນຕ້ອງເບິ່ງແຍງເດັກນ້ອຍໃນໄລຍະດຳເນີນການປຶກສາຫາລື;
- ຖ້າຊຸມຊົນຢູ່ຫ່າງໄກສອກຫຼີກຫຼາຍທີມງານ FPIC ຈຳເປັນຈະຕ້ອງພັກຄ້າງຄືນຢູ່ກັບຊຸມຊົນທ້ອງຖິ່ນ, ແນວລາວສ້າງຊາດຂັ້ນເມືອງສະເໜີນຳອຳນາດການປົກຄອງບ້ານຈັດຫາທີ່ພັກໃຫ້ແກ່ທີມງານ;
- ສ້າງວາລະຂອງເວທີການປຶກສາຫາລື FPIC ຮ່ວມກັບສະມາຊິກທີມງານ FPIC ທຸກຄົນ; (ຈົ່ງຈື່ໄວ້ວ່າໃຫ້ວາລະບໍ່ເປັນທາງການ ແລະ ບໍ່ໃຫ້ມີ “ປະທານ” ຫຼື ການຂຶ້ນກ່າວປາໄສແບບເປັນທາງການ.

**ວັດຖຸອຸປະກອນ ແລະ ສິ່ງອຳນວຍຄວາມສະດວກ.**

ແນວລາວສ້າງຊາດເມືອງ ຄວນຈະຮັບປະກັນວ່າ ວັດຖຸອຸປະກອນທີ່ຈຳເປັນ ແລະ ການຂົນສົ່ງໄດ້ຮັບການກະກຽມ ແລະ ມີຄວາມພ້ອມສຳລັບເວທີການປຶກສາຫາລື FPIC ຢູ່ໃນຊຸມຊົນທ້ອງຖິ່ນ. ຂໍສະເໜີແນະວ່າ ໃຫ້ໃຊ້ວັດຖຸອຸປະກອນໜ້ອຍທີ່ສຸດ, ຫຼີກລ້ຽງອຸປະກອນເອເລັກໂຕຣນິກ ຖ້າເປັນໄປໄດ້. ລາຍການຕໍ່ໄປນີ້ ແມ່ນເປັນລາຍການທີ່ຄວນໃຫ້ມີ:

[3] ບາງກຸ່ມຊົນເຜົ່າມີ “ວັນພັກ” ພິເສດ ເຊິ່ງເປັນເວລາ ທີ່ເຂົາເຈົ້າບໍ່ອອກໄປໄຮໄປສວນ ຂອງຕົນ; ແນະນຳໃຫ້ສຶກສາເບິ່ງວ່າແມ່ນຕອນໃດ, ເນື່ອງຈາກວ່າປະຊາຊົນສ່ວນໃຫຍ່ຈະຢູ່ໃນເຂດບ້ານເຮືອນ ຂອງຕົນເອງໃນວັນນັ້ນ.

- ເອກະສານໂຄງການ ທີ່ກ່ຽວຂ້ອງ, ບົດລາຍງານແຜນນໍາໃຊ້ທີ່ດິນຂັ້ນບ້ານ, ເອກະສານອ້າງອີງ ດ້ານກົດໝາຍ ແລະ ລະບຽບການ ທີ່ເປັນພາສາງ່າຍໆເພື່ອໃຊ້ໃນການປຶກສາຫາລືກັບຊຸມຊົນ ທ້ອງຖິ່ນ;
- ຂໍ້ມູນທີ່ກ່ຽວຂ້ອງເປັນເອກະສານທີ່ສາມາດປະໄວ້ກັບຊຸມຊົນທ້ອງຖິ່ນ (ເປັນຮູບແບບເອກະສານ ຈະດີກວ່າເປັນຮູບແບບດີຈີໂຕ ສໍາລັບຈຸດປະສົງນີ້!);
- ເຄື່ອງປັ່ນໄຟ (ຖ້າບໍ່ມີໄຟຟ້າ) ແລະ ອຸປະກອນໄຟຟ້າ (ເຊັ່ນ ສາຍໄຟ, ຫລອດໄຟ..);
- ລະບົບເຄື່ອງສຽງ (ລໍາໂພງ, ໄມ, ຖ່ານ, ເຄື່ອງສາກ);
- ກ້ອງຖ່າຍຮູບ ແລະ ກ້ອງວີດີໂອ (ຖ້າມີ);
- ເຈ້ຍແຜນໃຫຍ່;
- ຄອມພິວເຕີໂນດບຸກ ສໍາລັບໜ່ວຍງານ FPIC
- ບິກເຝີດ ແລະ ບິກ;
- ເຈ້ຍ A4
- ແຟ້ມໃສ່ເອກະສານ;
- ແຜ່ນພັບດ້ານຂໍ້ມູນເປັນພາສາ/ຮູບ ທີ່ເຂົ້າໃຈງ່າຍກ່ຽວກັບໂຄງການສໍາລັບຊຸມຊົນທ້ອງຖິ່ນ;
- ພາຫານະຕາມຄວາມຈໍາເປັນ;

ວັດຖຸສິ່ງຂອງຕໍ່ໄປນີ້ຄວນຈະພິຈາລະນາເພື່ອຊ່ວຍອໍານວຍຄວາມສະດວກໃນການສະເໜີຂໍ້ມູນໃຫ້ ຊຸມຊົນເຫັນຢ່າງປະຈັກຕາ. ການສະເໜີຂໍ້ມູນເຫລົ່ານີ້ຄວນສະເໜີ ຫຼື ສະໜອງໃຫ້ຢ່າງສົມເຫດສົມຜົນບໍ່ ໃຫ້ຫລາຍເກີນໄປ, ແຕ່ຄວນເອົາອັນທີ່ຈໍາເປັນກ່ຽວກັບໂຄງການມາປຶກສາຫາລືແລກປ່ຽນກັບຊຸມຊົນໃຫ້ ຫລາຍທີ່ສຸດເພື່ອໃຫ້ເຂົາເຈົ້າເຂົ້າໃຈຢ່າງເລິກເຊິ່ງ ແລະ ກວ້າງຂວາງ, ສໍາຄັນທີ່ສຸດແມ່ນບໍ່ໃຫ້ເວທີ ປຶກສາຫາລືເພື່ອຄວາມເຫັນດີເຫັນພ້ອມນີ້ກາຍເປັນການປູກຈິດສໍານຶກ.

- ຄອມພິວເຕີ ໂນດບຸກ;
- ປີ້ນເຕີ;
- ເຄື່ອງສາຍ LCD

ແນວລາວສ້າງຊາດເມືອງຈະຕ້ອງຮັບປະກັນວ່າຖ້າບໍ່ມີສະມາຊິກຂອງທີມງານ FPIC ທີ່ເວົ້າພາສາ ທ້ອງຖິ່ນໄດ້ດີ, ຕ້ອງຈ້າງຄົນ (ດີແທ້ ຍິງໜຶ່ງ, ຊາຍໜຶ່ງ) ຜູ້ທີ່ສາມາດຊ່ວຍແປມາຮ່ວມເວທີປຶກສາຫາລື FPIC.

**ງົບປະມານ:** (ປະຕິບັດຕາມລະບຽບການເງິນ, ທີ່ມີການປັບປຸງເປັນໄລຍະ ຂອງກະຊວງການເງິນ)

- ອັດຕາກິນ;
- ຄ່າພັກເຊົາ (ຖ້າຕ້ອງການ);
- ຄ່າຂົນສົ່ງ;
- ເງິນແຮເພື່ອຊື້ວັດສະດຸອຸປະກອນເພີ່ມເຕີມ, ຂອງຂວັນສໍາລັບຜູ້ຊ່ວຍກອງປະຊຸມ ແລະ ອື່ນໆ;

**ສິ່ງອື່ນໆ:** ໜ່ວຍງານ FPIC ຕ້ອງມີເອກະສານທາງການທີ່ຈໍາເປັນເພື່ອການເດີນທາງ ແລະ ການ ປະສານງານ/ພົວພັນ ຕາມທີ່ໄດ້ກໍານົດຢູ່ໃນລະບຽບການ.

**ໝາຍເຫດ**

ໜ່ວຍງານ FPIC ແລະ ພະນັກງານໂຄງການທຸກຄົນບໍ່ຕ້ອງຫວັງຈະກິນອາຫານຟຼີຈາກຊຸມຊົນທ້ອງຖິ່ນຈະຕ້ອງໄດ້ຈ່າຍເງິນຄ່າອາຫານຕ່າງໆ. ທີມງານ FPIC ຄວນຈະມີງົບປະມານ ເພື່ອຈ່າຍຄ່າອາຫານທ່ຽງ ຫລື ຢ່າງໜ້ອຍໃນຊ່ວງພັກຜ່ອນກິນກາເຟ, ທີ່ມີອາຫານຫວ່າງສໍາລັບຊຸມຊົນທ້ອງຖິ່ນ.

**ບາດກ້າວ 4: ການດໍາເນີນການປຶກສາຫາລື FPIC.**

**ກ່ອນການປຶກສາຫາລື.**

- ຮັບປະກັນວ່າສະຖານທີ່ໃຫ້ມີຄວາມພ້ອມ ແລະ ມີຜູ້ຍິງ ແລະ ຜູ້ຊາຍໃນຈໍານວນທີ່ພຽງພໍເຂົ້າຮ່ວມ.

  **ໝາຍເຫດ**

  ຍ້ອນເຫດຜົນໃດກໍຕາມຖ້າວ່າມີຄົນຈໍານວນນ້ອຍໂພດເຂົ້າຮ່ວມ, ມັນຈໍາເປັນຈະຕ້ອງໄດ້ຈັດວາງເວລາເລື່ອນການປຶກສາຫາລືໄປເປັນມື້ໃໝ່.
- ຈັດຫາສະຖານທີ່ປຶກສາຫາລືທີ່ມີບ່ອນນັ່ງ, ແຜ່ນໂປດສະເຕີ, ແຜ່ນພັບ, ໂຕະລົງທະບຽນ, ໂຕະວາງເຄື່ອງສາຍ LCD, ແຜ່ນຈໍ, ເຈ້ຍ ແລະ ອື່ນໆ.
- ຖ້າຈໍາເປັນກໍສະເໜີຂໍອາສາສະໝັກ ຍິງ ແລະ ຊາຍ ຈາກບ້ານ ເພື່ອມາເປັນຜູ້ຊ່ວຍໃນການປຶກສາຫາລື (ໂດຍມີຂອງຂວັນເລັກໆນ້ອຍໆໃຫ້ເຂົ້າເຈົ້າ);
- ລົງທະບຽນແມ່ຍິງ ແລະ ຜູ້ຊາຍທັງໝົດທີ່ມາເຂົ້າຮ່ວມເວທີການປຶກສາຫາລື (ຕາມແບບຟອມຄັດຕິດ) ລວມມີຊື່, ເພດ, ອາຍຸ, ກຸ່ມຊົນເຜົ່າ ແລະ ຊື່ ຂອງບ້ານນ້ອຍໆທີ່ເຂົາເຈົ້າອາໃສຢູ່ (ຖ້າມີບ້ານຫລາຍກວ່າ ໜຶ່ງບ້ານ);

**ຂັ້ນຕອນດໍາເນີນການປຶກສາຫາລື FPIC.**

- ອໍານາດການປົກຄອງບ້ານ ກ່າວຕ້ອນຮັບທຸກຄົນ ແລະ ແນະນໍາຜູ້ເຂົ້າຮ່ວມຈາກບ້ານແບບລວມໆ ໂດຍແຈ້ງໃຫ້ຮູ້ ຈໍານວນຜູ້ທີ່ມາຈາກອົງການຈັດຕັ້ງຂອງບ້ານ ແລະ ຊາວບ້ານທົ່ວໄປ ແລະ ແນະນໍາບາງຂໍ້ມູນພື້ນຖານໂດຍຫຍໍ້ ກ່ຽວກັບບ້ານ (ປະຊາກອນ, ຈໍານວນບ້ານນ້ອຍ, ກຸ່ມຊົນເຜົ່າທີ່ດໍາລົງຊີວິດຢູ່ທີ່ນັ້ນ, ທຸກຂໍ້ມູນພິເສດກ່ຽວກັບທໍາມະຊາດ ແລະ ວັດທະນາທໍາ ຂອງພື້ນທີ່, ອາຍຸຂອງບ້ານ ແລະ ອື່ນໆ);
- ສະມາຊິກໜ່ວຍງານ FPIC ທີ່ຖືກມອບໝາຍກ່າວຈຸດປະສົງ ຂອງການປຶກສາຫາລື ແລະ ແນະນໍາທີມງານ FPIC. ນອກຈາກນັ້ນ, ຜູ້ກ່ຽວຍັງຈະຕ້ອງນໍາສະເໜີວາລະ ແລະ ເຫດຜົນຂອງເວທີປຶກສາຫາລື ເຊັ່ນວ່າຈໍາເປັນຈະຕ້ອງເລືອກຕາງໜ້າຂອງຊາວບ້ານ (ກະລຸນາເບິ່ງຂ້າງລຸ່ມ) ແລະອາດຈະໄດ້ແບ່ງເປັນກຸ່ມແມ່ຍິງ ແລະ ກຸ່ມຜູ້ຊາຍຫຼັງຈາກສະເໜີວາລະເບື້ອງຕົ້ນ. ໄລຍະເວລາສໍາລັບການປຶກສາຫາລື ທີ່ຄາດໄວ້ນັ້ນຈະໄດ້ລະບຸຢ່າງຈະແຈ້ງ ລວມທັງເວລາທີ່ປະຊາຊົນອາດຈະໄດ້ພັກຜ່ອນ, ອາຫານວ່າງ ແລະ ວຽກອື່ນໆທີ່ຈະໄດ້ເຮັດພ້ອມໆກັນ.

- ເວລາເລີ່ມຕົ້ນ, ໜ່ວຍງານ FPIC ຈະຕ້ອງສ້າງຄວາມກະຈ່າງແຈ້ງໃຫ້ຫຼາຍວ່າຊຸມຊົນທ້ອງຖິ່ນຈະເປັນຜູ້ທີ່ຕັດສິນໃຈເອງກ່ຽວກັບໂຄງການ; ອັນນີ້ໝາຍຄວາມວ່າໜ່ວຍງານ FPIC ຄວນຈະນຳສະເໜີບັນຫາຕ່າງໆຢ່າງຈະແຈ້ງ (ຫຼື ຕັ້ງຄຳຖາມ) ທີ່ເຫັນວ່າຈຳເປັນສຳລັບການຕັດສິນໃຈຂອງຊຸມຊົນ;
- ຖ້າມີການແຍກເປັນສອງກຸ່ມ, ກຸ່ມແມ່ຍິງ ແລະ ກຸ່ມຜູ້ຊາຍ, ກ່ອນຈະແຍກກຸ່ມ, ໜ່ວຍງານ FPIC ຈະຕ້ອງສະເໜີຂໍນຳຜູ້ທີ່ເຂົ້າຮ່ວມການປຶກສາຫາລື ແຕ່ງຕັ້ງຜູ້ຕາງໜ້າຂອງຕົນໂດຍໃຫ້ເລືອກ 5 ຫາ 7 ຄົນ (ໃຫ້ຮັບປະກັນໃຫ້ມີທັງແມ່ຍິງ ແລະ ຜູ້ຊາຍ ແລະ ແຕ່ລະກຸ່ມຊົນເຜົ່າຢູ່ໃນຊຸມຊົນທ້ອງຖິ່ນມີຜູ້ຕາງໜ້າ). "ຜູ້ຕາງໜ້າຊົ່ວຄາວ" ເຫຼົ່ານີ້ ຈະເປັນຜູ້ເຊັນ "ບົດບັນທຶກການປຶກສາຫາລື" ໃນນາມຕາງໜ້າໃຫ້ຊຸມຊົນທ້ອງຖິ່ນ ແລະ ຈະເປັນກຸ່ມແກນກາງທີ່ຈະນຳພາການປຶກສາຫາລືພາຍໃນຊຸມຊົນທ້ອງຖິ່ນ ແລະ ເພື່ອເກັບກຳເອົາຄວາມຄິດເຫັນຕ່າງໆ ກ່ຽວກັບໂຄງການທີ່ໄດ້ສະເໜີຂຶ້ນມາ. ບັນດາຜູ້ຕາງໜ້າເຫຼົ່ານີ້ຍັງຈະເປັນຜູ້ແຈ້ງໃຫ້ຊາບກ່ຽວກັບການຕັດສິນໃຈຂອງຊຸມຊົນ. ສະນັ້ນ, ເຂົ້າເຈົ້າຈະຕ້ອງເປັນບຸກຄົນທີ່ສຳຄັນເປັນທີ່ເຊື່ອຖືຢູ່ໃນຊຸມຊົນ.

**<u>ໝາຍເຫດ</u>**

1) ໜ່ວຍງານ FPIC ຈະຕ້ອງມີຄວາມຍືດຍຸ່ນໄປຕາມຄວາມຕ້ອງການຕົວຈິງ ກ່ຽວກັບວາລະທີ່ໄດ້ສ້າງຂຶ້ນມາ; ແຕ່ເຖິງຢ່າງໃດກໍຕາມ, ທຸກການປ່ຽນແປງຢູ່ໃນວາລະຄວນຈະບັນທຶກໄວ້ໂດຍໜ່ວຍງານ FPIC;
2) ຖ້າແບ່ງເປັນສອງເວທີປຶກສາຫາລືທີ່ຈັດຂຶ້ນພ້ອມໆກັນເວທີໜຶ່ງສຳລັບແມ່ຍິງ ແລະ ອີກເວທີໜຶ່ງ ແມ່ນສຳລັບຜູ້ຊາຍ, ຄວນມີການແນະນຳແບບລວມກັນກ່ອນໜຶ່ງເທື່ອຢູ່ໃນສະຖານທີ່ດຽວກັນ ຫຼັງຈາກນັ້ນ ຈຶ່ງແຍກກັນອອກເປັນສອງກຸ່ມຕາມເພດ. ກອງປະຊຸມຈະຕ້ອງຈົບລົງໂດຍທີ່ທຸກຄົນເຂົ້າມາລວມກັນອີກຄັ້ງສຳລັບສັງລວມໝາກຜົນ.

- ໜ່ວຍງານ FPIC ຈະຕ້ອງນຳສະເໜີຢ່າງຈະແຈ້ງກ່ຽວກັບໂຄງການ ແລະ ສິ່ງທີ່ໂຄງການມຸ້ງຫວັງຢາກຈະເຮັດ ແລະ ດຳເນີນງານ (ປະເພດກິດຈະກຳ, ໄລຍະເວລາ ແລະ ອື່ນໆ), ລວມທັງການສົນທະນາກ່ຽວກັບຜົນໄດ້ຮັບ ຈາກທຸກການວາງແຜນນຳໃຊ້ທີ່ດິນທີ່ໄດ້ປະຕິບັດແລ້ວຢູ່ໃນພື້ນທີ່, ເບິ່ງວ່າທຸກຄົນຮູ້ ແລະ ເຂົ້າໃຈໂຄງການດີ ຫຼື ບໍ ແລະ ເຂົາເຈົ້າມີຄວາມພໍໃຈກັບໝາກຜົນຂອງການປຶກສາຫາລື (ຢູ່ໃນເວທີການປຶກສາຫາລື ທີ່ອາດຈະແຍກກັນລະຫວ່າງແມ່ຍິງ ແລະ ຜູ້ຊາຍ);
- ໜ່ວຍງານ FPIC ຄວນຈະຊຸກຍູ້ຜູ້ເຂົ້າຮ່ວມໃຫ້ແລກປ່ຽນ, ສົນທະນາ ແລະ ຕັ້ງຄຳຖາມກ່ຽວກັບໂຄງການ (ຢູ່ໃນ ເວທີປຶກສາຫາລື ທີ່ແຍກຍິງ ແລະ ຊາຍ);
- ສະມາຊິກໜ່ວຍງານ FPIC ທີ່ຖືກມອບໝາຍຈະເປັນຜູ້ບັນທຶກທຸກບັນຫາ ຫຼື ຄຳຖາມ ໃຫຍ່ໆຕະຫລອດໄລຍະການປຶກສາຫາລື. ອັນນີ້ແມ່ນໝາຍຄວາມວ່າຈະມີສອງບົດບັນທຶກການປຶກສາຫາລື ຕໍ່ໜຶ່ງຊຸມຊົນ ທ້ອງຖິ່ນມີບົດບັນທຶກທີໜຶ່ງ ຈາກເວທີການປຶກສາຫາລື ສຳລັບຜູ້ຊາຍ ແລະ ອີກບົດບັນທຶກໜຶ່ງ ແມ່ນຈາກ ການປຶກສາຫາລື ສຳລັບແມ່ຍິງ, ຖ້າຫາກມີການແຍກກຸ່ມ;

- ໃນຕ້ອນທ້າຍຂອງການປຶກສາຫາລື FPIC, ແມ່ຍິງ ແລະ ຜູ້ຊາຍຄວນຈະມາຮ່ວມກອງປະຊຸມນຳກັນອີກເທື່ອໜຶ່ງ ແລະ ຄຳຖາມ ແລະ ບັນຫາໃຫຍ່ໆຄວນຈະຖືກນຳມາສະເໜີໃຫ້ທຸກຄົນຮູ້ເພື່ອໃຫ້ທຸກຄົນສາ ມາດເຫັນວ່າທັງສອງກຸ່ມໄດ້ປຶກສາຫາລືກັນເລື່ອງຫັຍງ;
- **ສຳຄັນຫຼາຍ** - ໃນຕອນທ້າຍ ຂອງການປຶກສາຫາລື FPIC, ທຸກຄົນທີ່ເຂົ້າມາຮ່ວມຈະໄດ້ຮັບແຈ້ງໃຫ້ຮູ້ວ່າດຽວນີ້ເຂົາເຈົ້າມີເວລາໜຶ່ງ ຫາ ສອງອາທິດ (ເວລາຫລາຍກວ່ານີ້ຖ້າວ່າປະຊາຊົນຫາກບອກວ່າເຂົາເຈົ້າຕ້ອງ ການເວລາຕື່ມອີກ) ເພື່ອຕັດສິນໃຈກ່ຽວກັບໂຄງການ. ຜູ້ຕາງໜ້າຊຸມຊົນທ້ອງຖິ່ນມີໜ້າທີ່ສືບຕໍ່ປຶກສາຫາລືພາຍໃນຊຸມຊົນ ເພື່ອບັນລຸການຕັດສິນໃຈໂດຍສຽງສ່ວນຫລາຍກ່ຽວກັບໂຄງການ.

**ຫຼັງຈາກເວທີປຶກສາຫາລື FPIC.**

- ສຳລັບການຈັດເວທີປຶກສາຫາລື FPIC ທຸກໆຄັ້ງ, ຈະຕ້ອງໄດ້ສ້າງບົດບັນທຶກເວທີປຶກສາຫາລືໄວ້ ຊຶ່ງລວມ ຕ້ອງລວມມີການສັງລວມບັນຫາຕ່າງໆ ທີ່ໄດ້ມີການປຶກສາຫາລື ຫຼື ຕັດສິນໃຈນຳກັນແລ້ວ. ເພື່ອປະຫຍັດເວລາ ແລະ ຫລີກລ້ຽງການຈັດເວທີປຶກສາຫາລືອີກຄັ້ງໜຶ່ງ, ບົດບັນທຶກຄວນຈະໃຫ້ສຳເລັດຢູ່ໃນເວທີການປຶກສາຫາລືແຕ່ລະຄັ້ງນັ້ນເລີຍ ແລະ ອ່ານຜ່ານເວທີການປຶກສາຫາລື ຊຶ່ງຜູ້ເຂົ້າຮ່ວມທັງໝົດຈະໄດ້ຮັບຮູ້ ແລະ ມີຄຳເຫັນເພີ່ມເຕີມ ແລະ ປັບປຸງ, ຕາມການຕົກລົງເປັນເອກະພາບກັນ. ເວທີປຶກສາຫາລື FPIC ຈະໄດ້ປິດລົງຫລັງຈາກທີ່ທຸກພາກສ່ວນເຊັ່ນ ຫົວໜ້າໜ່ວຍງານ FPIC, ບັນດາຜູ້ຕາງໜ້າຊຸມຊົນທ້ອງຖິ່ນ, ໄດ້ລົງລາຍເຊັນໃສ່ບົດບັນທຶກ.
- ໃນກໍລະນີທີ່ຫລີກລ້ຽງບໍ່ໄດ້, ເຊັ່ນວ່າຜູ້ຕາງໜ້າຊຸມຊົນຄົນສຳຄັນບໍ່ສາມາດເຂົ້າມາຮ່ວມ ແຕ່ຈຳເປັນຕ້ອງໄດ້ປຶກສາຫາລືຂໍຄຳເຫັນເພື່ອການຕັດສິນໃຈ, ບົດບັນທຶກຈະໄດ້ປະໄວ້ກັບຊຸມຊົນທ້ອງຖິ່ນ ເພື່ອປຶກສາຫາລືແລກປ່ຽນຢູ່ພາຍໃນ ເພື່ອບັນລຸຄວາມເປັນເອກະພາບໃນການຕັດສິນໃຈ.

  ໄລຍະເວລາສຳລັບການປຶກສາຫາລືພາຍໃນຊຸມຊົນຄວນໃຫ້ຢູ່ພາຍໃນ ໜຶ່ງອາທິດ ສຳລັບເວທີປຶກສາຫາລືແຕ່ລະຄັ້ງ, ນອກຈາກວ່າຊຸມຊົນຍັງມີຫລາຍບັນຫາທີ່ຕ້ອງການຄວາມຈະຈ່າງແຈ້ງຊຶ່ງໂຄງການຕ້ອງໄດ້ຊ່ວຍເຮັດໃຫ້ເຂົ້າໃຈເປັນຢ່າງດີ, ອາດຈະເປັນດ້ານວິຊາການ, ການເງິນຫລື ດ້ານນະໂຍບາຍ ແລະ ນິຕິກຳ, ທີ່ອາດສົ່ງຜົນກະທົບຕໍ່ຊີວິດການເປັນຢູ່ຂອງເຂົາເຈົ້າ. ຫລັງຈາກທີ່ບັນລຸການຕັດສິນໃຈແລ້ວ, ຕົວແທນຂອງຊຸມຊົນທີ່ໄດ້ເລືອກໄວ້, ຈະສື່ສານກ່ຽວກັບການຕັດສິນໃຈຂອງຕົນຕໍ່ກັບໂຄງການ ຫຼື ຄຳສະເໜີຂອງຕົນສຳລັບຂໍ້ມູນເພີ່ມເຕີມຕໍ່ທີມງານ FPIC ທີ່ຈະຕຽມບົດບັນທຶກສຸດທ້າຍເພື່ອລົງລາຍເຊັນ.

  **<u>ໝາຍເຫດ</u>**

  ເວທີປຶກສາຫາລືທັງໝົດທີ່ກ່ຽວຂ້ອງກັບ FPIC ຈະຕ້ອງຈັດຂຶ້ນໃນລັກສະນະທີ່ຄ້າຍໆຄືກັນ. ດີແທ້ຜູ້ຕາງໜ້າຊຸມຊົນທີ່ຖືກເລືອກໃນເວທີປຶກສາຫາລື FPIC ໃນເບື້ອງຕົ້ນນັ້ນຄວນຈະເປັນຄົນດຽວກັນທີ່ເຂົ້າຮ່ວມເວທີປຶກສາຫາລື FPIC ໃນທຸກໆຄັ້ງ ເພື່ອໃຫ້ມີຄວາມຕໍ່ເນື່ອງໃນຂະບວນການປຶກສາຫາລື. ສິ່ງທີ່ສຳຄັນ ແລະ ຈຳເປັນ ແມ່ນການປ່ອຍໃຫ້ປະຊາຊົນມີເວລາພຽງພໍ ຫຼັງ

ຈາກເວທີປຶກສາຫາລືແຕ່ລະຄັ້ງຕາມຕ້ອງການຕົວຈິງ, ການສົນທະນາ ແລະ ການຕັດສິນໃຈຢູ່ພາຍໃນເຂົາເຈົ້າເອງກ່ອນກ້າວໄປຂ້າງໜ້າເພື່ອຈັດເວທີປຶກສາຫາລືໃນຄັ້ງຕໍ່ໄປ.

**ບາດກ້າວ 5: ສ້າງບົດສະຫຼຸບໂດຍລວມ ແລະ ບົດຮຽນທີ່ຖອດຖອນໄດ້.**

ຫຼັງຈາກສໍາເລັດເວທີປຶກສາຫາລື FPIC ແຕ່ລະຄັ້ງ, ໜ່ວຍງານ FPIC ຈະຕ້ອງສ້າງບົດສະຫຼຸບສັງລວມວ່າຂະບວນການທັງໝົດໄດ້ຖືກດໍາເນີນງານໄປຄືແນວໃດ, ນັບແຕ່ການກະກຽມຜ່ານໄປສູ່ຈຸດສໍາເລັດການສ້າງບົດບັນທຶກ. ບົດສະຫຼຸບສັງລວມນີ້ອາດຈະລວມເອົາດ້ານດີ, ດ້ານອ່ອນ, ຂໍ້ສະດວກ, ຂໍ້ຫຍຸ້ງຍາກ ແລະ ບົດຮຽນທີ່ຖອດຖອນໄດ້ຈາກການດໍາເນີນ ບາດກ້າວຕ່າງໆ. ໜ່ວຍງານ FPIC ຄວນຈະໃຫ້ຄໍາຊີ້ແນະ ຫຼື ຂໍ້ແນະນໍາ ແກ່ເຈົ້າຂອງກິດຈະກໍາໂຄງການ, ອໍານາດການປົກຄອງ, ຊຸມຊົນທ້ອງຖິ່ນຢູ່ບ່ອນທີ່ໄດ້ຈັດເວທີປຶກສາຫາລື, ແນວລາວສ້າງຊາດ, ສະຫະພັນແມ່ຍິງ ແລະ ທຸກໆ ພາກສ່ວນທີ່ກ່ຽວຂ້ອງ.

## ພາກທີ III

### ການຕິດຕາມກວດກາ ແລະ ການປະເມີນຜົນ

### 1. ການຕິດຕາມກວດກາການຈັດຕັ້ງປະຕິບັດສັນຍາ FPIC

ເມື່ອມີປະຊາຊົນທ້ອງຖິ່ນໃຫ້ຄວາມເຫັນດີເຫັນພ້ອມເປັນສ່ວນຫລາຍກວມເອົາ 2 ສ່ວນ 3, ໂຄງການອາດຈະເລີ່ມຈັດຕັ້ງປະຕິບັດໄດ້ໂດຍອີງໃສ່ແຜນການທີ່ໄດ້ຕົກລົງກັນໄວ້. ເພື່ອຮັບປະກັນວ່າການຈັດຕັ້ງປະຕິບັດໂຄງການໃຫ້ເປັນໄປຕາມທີ່ໄດ້ຕົກລົງກັນກັບຊຸມຊົນທ້ອງຖິ່ນ, ສັນຍາຈໍາເປັນຕ້ອງໄດ້ຮັບການຕິດຕາມກວດກາ ໂດຍພາກສ່ວນກ່ຽວຂ້ອງດັ່ງຕໍ່ໄປນີ້:

- ອໍານາດການປົກຄອງທີ່ກ່ຽວຂ້ອງຈາກຂັ້ນຕ່າງໆ: ແຂວງ, ເມືອງ ແລະ ບ້ານ
- ແນວລາວສ້າງຊາດໃນຂັ້ນຕ່າງໆ: ແຂວງ, ເມືອງ ແລະ ບ້ານ
- ສະຫະພັນແມ່ຍິງໃນຂັ້ນຕ່າງໆ: ແຂວງ, ເມືອງ ແລະ ບ້ານ
- ທຸກໆພາກສ່ວນທີ່ກ່ຽວຂ້ອງອື່ນໆ;
- ທຸກໆຄົນ ຫຼື ອົງການຈັດຕັ້ງ ທີ່ໄດ້ຖືກແຕ່ງຕັ້ງມອບໝາຍໃຫ້ຕິດຕາມກວດກາ.

ການຕິດຕາມກວດກາການຈັດຕັ້ງປະຕິບັດສັນຍາຈະໄດ້ດໍາເນີນໄປໂດຍອີງຕາມຄວາມຈໍາເປັນ ແຕ່ບໍ່ໃຫ້ໜ້ອຍກວ່າ 1 ຄັ້ງ ຕໍ່ 6 ເດືອນ. ກອງປະຊຸມດັ່ງກ່າວຈະຕ້ອງຖືກຈັດຂຶ້ນໃນລະດັບຕ່າງໆ (ຫຼັກໆແມ່ນຢູ່ຂັ້ນເມືອງ) ພິເສດແມ່ນເພື່ອຕິດຕາມເບິ່ງທຸກຄວາມຜິດປົກກະຕິ ຫຼື ຄວາມຫຍຸ້ງຍາກທີ່ມີການລາຍງານ. ການສົນທະນາໃນກອງປະຊຸມກ່ຽວກັບການຕິດຕາມກວດກາ ຈະອີງໃສ່ບົດລາຍງານການຕິດຕາມກວດກາຈາກບ້ານ ຫາ ເມືອງ. ບົດລາຍງານເຫຼົ່ານີ້ ຄວນສຸມໃສ່ເນື້ອໃນທີ່ໄດ້ມີການຕົກລົງເຫັນດີນໍາກັນພາຍໃຕ້ຂະບວນການ FPIC ຖືກເຄົາລົບ ແລະ ຈັດຕັ້ງປະຕິບັດຢ່າງຖືກ ຕ້ອງ ຫລື ບໍ່. ບົດລາຍງານເຫຼົ່ານີ້ຄວນຈະໄດ້ສົ່ງອອກຢ່າງເປັນປົກກະຕິ, ແຕ່ບໍ່ໃຫ້ຫຼາຍກວ່າໜຶ່ງຄັ້ງ ຕໍ່ໄຕມາດ ຍ້ອນວ່າ

ມັນຈະສ້າງຄວາມຫຍຸ້ງຍາກໃຫ້ປະຊາຊົນທ້ອງຖິ່ນໃນການຂຽນບົດລາຍງານເປັນອັນລະອຽດ. ແນວລາວສ້າງຊາດ ໃນແຕ່ລະຂັ້ນຈະຕ້ອງຮັບປະກັນວ່າບົດລາຍງານການຕິດຕາມກວດກາ ແລະ ກວດການ ໄດ້ສົ່ງໄປເຖິງຂັ້ນທີ່ເໝາະສົມ, ໄປເຖິງໂຄງການ ແລະ ຄະນະຊີ້ນຳໂຄງການ.

ຜູ້ທີ່ເຂົ້າຮ່ວມກອງປະຊຸມກ່ຽວກັບການຕິດຕາມກວດກາດັ່ງກ່າວກໍອາດຈະຕັດສິນໃຈດຳເນີນການກວດການເພື່ອເກັບກຳຂໍ້ມູນເພີ່ມເຕີມ ຫຼື ກວດເບິ່ງຂໍ້ມູນທີ່ໄດ້ສະໜອງໃຫ້ຢູ່ໃນບົດລາຍງານການຕິດຕາມກວດກາ, ການກວດການຈະໄດ້ດຳເນີນຂຶ້ນ ໂດຍອີງຕາມຄວາມຈຳເປັນ ແລະ ຍັງໃຫ້ພາກສ່ວນກ່ຽວຂ້ອງກັບໂຄງການຈາກຂັ້ນແຂວງເຂົ້າຮ່ວມນຳອີກ.

2. **ການປະເມີນຜົນ.**

- ຫຼັງຈາກນຳໃຊ້ຄຳແນະນຳສະບັບນີ້ເປັນເວລາໜຶ່ງປີແລ້ວ, ບັນດາຈຸດດີ, ສິ່ງທ້າທາຍ, ບົດຮຽນທີ່ຖອດຖອນໄດ້ ແລະ ທຸກຊ່ອງວ່າງ (ສິ່ງທີ່ຍັງຂາດເຂີນ) ຂອງຄຳແນະນຳສະບັບນີ້ຄວນຈະໄດ້ຮັບການປະເມີນຜົນ ແລະ ແກ້ໄຂຜ່ານກອງປະຊຸມປະເມີນຜົນທີ່ຈັດຂຶ້ນຢູ່ ແຂວງຫົວພັນ. ຈຸດປະສົງຂອງການປະເມີນຜົນແມ່ນເພື່ອສືບຕໍ່ປັບປຸງ ຄຳແນະນຳທີ່ຄວນຈະໄດ້ຮັບການປັບປຸງ ແລະ ດັດແກ້ໄປຕາມຄວາມຕ້ອງການຂອງຜູ້ຊົມໃຊ້;
- ອົງການຈັດຕັ້ງເຈົ້າການ ທີ່ມີໜ້າທີ່ຮັບຜິດຊອບຕໍ່ກັບການປະເມີນຜົນນີ້ ແມ່ນແນວລາວສ້າງຊາດແຂວງ ທີ່ຈະຕ້ອງຮັບປະກັນວ່າມີການເຂົ້າຮ່ວມໃນກອງປະຊຸມປະເມີນຜົນ ຂອງທຸກສ່ວນທີ່ກ່ຽວຂ້ອງ ຊຶ່ງນັບແຕ່ຊຸມຊົນທ້ອງຖິ່ນຂຶ້ນໄປຫາຂັ້ນສູນກາງ.

3. **ວິທີຈັດຕັ້ງປະຕິບັດ.**

- ມອບໃຫ້ໜ່ວຍງານເອບພິກ (FPIC) ຂອງເມືອງຈັດຕັ້ງປະຕິບັດຄຳແນະນຳສະບັບນີ້ໃຫ້ໄດ້ຮັບຜົນດີ.
- ການຈັດຕັ້ງປະຕິບັດຄຳແນະນຳສະບັບນີ້ ຫາກພົບຄວາມຫຍຸ້ງຍາກ ໃຫ້ລາຍງານແນວລາວສ້າງຊາດ ແຂວງຫົວພັນ ຕາມຂັ້ນຕອນເພື່ອແກ້ໄຂໃຫ້ທັນເວລາ.

**ແບບຟອມຄັດຕິດ:**

**ໃບລົງທະບຽນຜູ້ເຂົ້າຮ່ວມການປຶກສາຫາລືເພື່ອຄວາມເຫັນດີເຫັນພ້ອມຂັ້ນບ້ານ**

ຄັ້ງວັນທີ....../......./................ຢູ່ບ້ານ............................ເມືອງ............................ແຂວງ......................

| ລ/ດ | ຊື່ ແລະນາມສະກຸນ | ອາຍຸ | ເພດ | ຊົນເຜົ່າ | ອາຊີບ | ເບີໂທ | ລາຍເຊັນ/ຈ້ຳໂປ້ |
|---|---|---|---|---|---|---|---|
| 1. | | | | | | | |
| 2. | | | | | | | |
| 3. | | | | | | | |
| 4. | | | | | | | |
| 5. | | | | | | | |
| 6. | | | | | | | |
| 7. | | | | | | | |
| 8. | | | | | | | |
| 9. | | | | | | | |
| 10. | | | | | | | |
| 11. | | | | | | | |
| 12. | | | | | | | |
| 13. | | | | | | | |
| 14. | | | | | | | |
| 15. | | | | | | | |
| 16. | | | | | | | |
| 17. | | | | | | | |
| 18. | | | | | | | |
| 19. | | | | | | | |
| 20. | | | | | | | |
| 21. | | | | | | | |
| 22. | | | | | | | |
| 23. | | | | | | | |
| 24. | | | | | | | |

ໃບສັງລວມຜູ້ມາເຂົ້າຮ່ວມການປຶກສາຫາລືຄັ້ງທີ ......ຢູ່ບ້ານ........................ເມືອງ....................ແຂວງ .............

| ຊົນເຜົ່າ | ຈ/ນເຂົ້າຮ່ວມທັງໝົດ | | | ອາຍຸ | | | | ໝາຍເຫດ |
|---|---|---|---|---|---|---|---|---|
| | ຍິງ | ຊາຍ | ລວມ | 15-25 | 26-35 | 37-60 | >60 | |
| | | | | | | | | |
| | | | | | | | | |
| | | | | | | | | |
| | | | | | | | | |
| ອັດຕາສ່ວນ % | | | 100 | | | | | |
| ອັດຕາສ່ວນຜູ້ເຂົ້າຮ່ວມສົມທຽບໃສ່ຈຳນວນຊາວບ້ານທັງໝົດ: | | | | | | | | |
| ອາຍຸຕ່ຳສຸດ: | | | | | | | | |
| ອາຍຸສູງສຸດ: | | | | | | | | |
| ຄຳເຫັນທົ່ວໄປ | | | | | | | | |